# ວາລະສານຂ່າວ ບີຄວາ

ປັບປຸງຄຸນນະພາບ ແລະ ການເຂົ້າເຖິງການສຶກສາຂັ້ນພື້ນຖານ
ໃຫ້ແກ່ເດັກຍິງ ແລະ ເດັກຊາຍໃນ ສປປ ລາວ

ເດືອນພະຈິກ 2016 | ສະບັບທີ 1





**1-2** ຂໍ້ຄວາມຈາກກະຊວງສຶກສາທິການ ແລະ ກິລາ, ລັດຖະບານອົດສະຕຣາລີ ແລະ ສະຫະພາບເອີຣົບ

**3** ແຜນງານບີຄວາ ຖືກເຜີຍແຜ່ໃນຂ່າວເດີກາດ້ຽນ

**4** ສົ່ງເສີມການເຂົ້າໂຮງຮຽນ ແລະ ຄວາມມັກຮັກໃນການຮຽນຮູ້

**5-6** ຄູທ້ອງຖິ່ນ ແມ່ນກຸນແຈສຳຄັນ ທີ່ຈະເຮັດໃຫ້ການສຶກສາ ລາວ ປະສົບຜົນສຳເລັດໄດ້

**7** ການສຶກສາຮຽນຮ່ວມ: ຊ່ວຍເຮັດໃຫ້ມີເດັກນ້ອຍ ໄປເຂົ້າໂຮງຮຽນຫຼາຍຂຶ້ນ

**8** ການພັດທະນາ ຫຼັກສູດການຮຽນ-ການສອນຊັ້ນປະຖົມ ທີ່ທັນສະໄໝ

**9** ການປັບປຸງສະພາບແວດລ້ອມໃນການຮໍ່າຮຽນ ໃຫ້ແກ່ເດັກນ້ອຍທຸກຄົນ

**10** ຊ່ວຍໃຫ້ເດັກນ້ອຍ ມີສັກກະຍະພາບຢ່າງເຕັມສ່ວນ ຜ່ານການສະໜອງອາຫານທີ່ດີຕໍ່ສຸຂະພາບ


Australian Aid

European Union

## ຂໍ້ຄວາມຈາກກະຊວງສຶກສາທິການ ແລະ ກິລາ



ຕາງໜ້າໃຫ້ພະນັກງານກະຊວງສຶກສາທິການ ແລະ ກິລາ (ກະຊວງ ສສກ), ຂ້າພະເຈົ້າ ຂໍສະແດງຄວາມຍິນດີຕໍ່ກັບການຈັດພິມວາລະສານຂ່າວ ສະບັບທໍາອິດ ຂອງແຜນງານບີຄວາ. ວາລະສານຂ່າວ ດັ່ງກ່າວນີ້ ຈະ-ຊ່ວຍ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດ ແຜນງານບີຄວາ ໃນ ສປປ ລາວ ໃຫ້ແກ່ບັນດາ ຄູ່ຮ່ວມງານດ້ານການສຶກສາ ໄດ້ຮັບຊາບ. ຂ້າພະເຈົ້າ ຮູ້ສຶກດີໃຈຫຼາຍ ທີ່ທາງ ອົດສະຕຣາລີ ໄດ້ອອກແບບ ບີຄວາໂດຍນໍາໃຊ້ຮູບແບບແຜນງານ ເຊິ່ງມີວິທີການເຮັດວຽກທີ່ແຕກຕ່າງຈາກ ໂຄງການອື່ນໆທີ່ຜ່ານມາ ຍ້ອນແຜນງານບີຄວາ ໄດ້ຊັບຊ້ອນໃຫ້ບັນດາຊ່ຽວຊານຂອງຕົນ ໄປປະຈໍາຢູ່ ບັນດາກົມ, ສະຖາບັນ ແລະ ສູນຕ່າງໆ ທີ່ກ່ຽວຂ້ອງກັບແຜນງານ ເພື່ອເຮັດວຽກຮ່ວມກັນຢ່າງໃກ້ຊິດຕິດແທດ. ຮູບແບບດັ່ງກ່າວນີ້ ຖືເປັນການເສີມສ້າງຂີດຄວາມສາມາດໃຫ້ແກ່ພະນັກງານຂອງ ກະຊວງ ສສກ ໂດຍຜ່ານການເຮັດວຽກຕົວຈິງ ພ້ອມນີ້ ແຜນງານບີຄວາ ຍັງມີການຈັດຕັ້ງປະຕິບັດກິດຈະກໍາ ຢູ່ໃນຂັ້ນທ້ອງຖິ່ນນໍາອີກ.

ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈ ມາຍັງລັດຖະບານ ອົດສະຕຣາລີ ແລະ ສະຫະພາບເອີຣົບ (EU) ທີ່ໃຫ້ການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ດ້ານວິຊາການ ເພື່ອປັບປຸງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ ເຊິ່ງຈະຊ່ວຍໃນການຫຼຸດຜ່ອນຄວາມແຕກໂຕນ ໃນການເຂົ້າເຖິງການສຶກສາ ທີ່ມີຄຸນນະພາບ ລະຫວ່າງ ເຂດຫ່າງໄກສອກຫຼີກ ແລະ ເຂດຕົວເມືອງ. ແຜນງານບີຄວາເປັນແຜນງານຕົວແບບ ທີ່ເນັ້ນໃສ່ການເຮັດວຽກເພື່ອໃຫ້ໄດ້ ຜົນຮັບທີ່ຍືນຍົງ ແລະ ໄປຕາມບູລິມະສິດຂອງລັດຖະບານ ຫຼາຍກວ່າເນັ້ນໃສ່ ການຈັດຕັ້ງປະຕິບັດກິດຈະກໍາໃຫ້ແລ້ວຕາມກໍານົດເວລາເທົ່ານັ້ນ. ດັ່ງທີ່ພວກເຮົາຮູ້ກັນດີແລ້ວວ່າ ຄູສອນ ແມ່ນກຸນແຈສໍາຄັນ ໃນການປັບປຸງຜົນການຮຽນ ສະນັ້ນການເນັ້ນໜັກໃສ່ການປັບປຸງການຮຽນການສອນ ໃນຫ້ອງຮຽນ ແມ່ນສິ່ງທີ່ໜ້າຍິນດີ.

ໃນຂັ້ນສູນກາງ, ພວກເຮົາ ກໍາລັງປັບປຸງຫຼັກສູດການຮຽນ-ການສອນຂັ້ນປະຖົມ, ປຶ້ມແບບຮຽນ, ສື່ການຮຽນ-ການສອນອື່ນໆ ແລະ ຄູ່ມືຄູ ເພື່ອເຮັດໃຫ້ຫຼັກສູດການຮຽນ-ການສອນ ມີປະສິດທິພາບສູງ ແລະ ໃຫ້ມີຄວາມສອດຄ່ອງກັບສະພາບການໃນປະຈຸບັນ. ນອກຈາກນີ້, ແຜນງານບີຄວາ ຍັງໃຫ້ການຊ່ວຍເຫຼືອ ພວກເຮົາ ໃນການປັບປຸງຫຼັກສູດການຮຽນ-ການສອນ ແລະ ອຸປະກອນການຮຽນ/ການສອນ ສໍາລັບວຽກງານສ້າງຄູ ແລະ ບໍາລຸງຄູປະຈໍາການຊັ້ນປະຖົມ. ພວກເຮົາ ໝັ້ນໃຈວ່າ ການຊ່ວຍເຫຼືອດັ່ງກ່າວນີ້ ຈະເປັນການຍົກລະດັບຜົນການຮຽນຂອງນັກຮຽນໃຫ້ດີຂຶ້ນ. ພ້ອມດຽວກັນນັ້ນ, ແຜນງານບີຄວາ ຍັງສ້າງຂີດຄວາມສາມາດຂອງຜູ້ບໍລິຫານ ແລະ ຜູ້ອໍານວຍການ ດ້ານການສຶກສາໃນ ຂັ້ນທ້ອງຖິ່ນ ຂອງພວກເຮົາ ເຊິ່ງສອດຄ່ອງກັບ ນະໂຍບາຍ "ສາມສ້າງ" ຂອງລັດຖະບານ.

ວິໄສທັດດ້ານການສຶກສາ ແມ່ນ "ຮອດປີ 2030 ພົນລະເມືອງລາວທຸກຄົນ ໄດ້ຮັບ ການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບ ແລະ ເທົ່າທຽມກັນເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອພັດທະນາປະເທດຊາດໃຫ້ສີວິໄລຍືນຍົງ ສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້."

ເປົ້າໝາຍຂອງແຜນງານບີຄວາ ແມ່ນມີຄວາມສອດຄ່ອງກັບວິໄສທັດຂອງພວກເຮົາ ແລະ ດ້ວຍເຫດນີ້ ຈຶ່ງເຫັນໄດ້ວ່າ ພວກເຮົາ ກໍາລັງເຮັດວຽກ ເພື່ອກ້າວໄປສູ່ເປົ້າໝາຍອັນດຽວກັນ.

ພວກເຮົາ ຫວັງວ່າຈະໄດ້ສືບຕໍ່ເຮັດວຽກຮ່ວມກັນ.

ພະນະທ່ານ ນ. ແສງເດືອນ ຫຼ້າຈັນທະບູນ

ລັດຖະມົນຕີ, ກະຊວງສຶກສາທິການ ແລະ ກິລາ.

> **ຮອດປີ 2030 ພົນລະເມືອງລາວທຸກຄົນໄດ້ຮັບ ການສຶກສາທີ່ມີຄຸນນະພາບຢ່າງສະເໝີພາບ ແລະ ເທົ່າທຽມກັນເພື່ອໃຫ້ເຂົາເຈົ້າໄດ້ພັດທະນາຕົນເອງກາຍເປັນພົນລະເມືອງດີຂອງຊາດ, ມີຄຸນສົມບັດ, ມີສຸຂະພາບເຂັ້ມແຂງ, ມີຄວາມຮູ້ຄວາມສາມາດສູງ, ມີຄວາມເປັນມືອາຊີບເພື່ອ ພັດທະນາປະເທດຊາດໃຫ້ສີວິໄລຍືນຍົງ ສາມາດເຊື່ອມໂຍງ, ແຂ່ງຂັນກັບພາກພື້ນ ແລະ ສາກົນໄດ້.**

## ຂໍ້ຄວາມຈາກລັດຖະບານ ອົດສະຕຣາລີ



ຂ້າພະເຈົ້າ ຮູ້ສຶກດີໃຈ ທີ່ໄດ້ປະກອບສ່ວນເຂົ້າໃນວາລະສານຂ່າວ ສະບັບທໍາອິດຂອງ ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍ ໂອກາດເຂົ້າຮຽນ ສໍາລັບການສຶກສາ ຂັ້ນພື້ນຖານໃນ ສປປ ລາວ (ແຜນງານບີຄວາ). ແຜນງານ ບີຄວາ ແມ່ນການຊ່ວຍເຫຼືອ ເພື່ອການພັດທະນາ ທີ່ສໍາຄັນ ທີ່ສຸດຂອງ ອົດສະຕຣາລີໃນ ສປປ ລາວ ມາຮອດປະຈຸບັນ. ຂະແໜງການສຶກສາ ແມ່ນຂະແໜງໜຶ່ງ ທີ່ພວກຂ້າພະເຈົ້າ ເຊື່ອໝັ້ນວ່າ ອົດສະຕຣາລີ ມີຄວາມຊໍານິຊໍານານ ແລະ ສາມາດປະກອບສ່ວນ ອັນສໍາຄັນ ໃນວຽກງານນີ້ ແລະ ຈະສາມາດສືບຕໍ່ການຮ່ວມມືຢ່າງໃກ້ຊິດຕິດແທດກັບກະຊວງ ສຶກສາທິການ ແລະ ກິລາ ໄດ້ເປັນເວລາຫຼາຍປີ.

ພວກເຮົາ ຍັງມີຄູ່ຮ່ວມງານໃໝ່ ໃນການຈັດຕັ້ງປະຕິບັດແຜນງານບີຄວາ - ລັດຖະບານອົດສະຕຣາລີ ແລະ ສະຫະພາບເອີຣົບ ໄດ້ເລີ່ມຕົ້ນການຮ່ວມມືແບບໃໝ່ໃນ ວຽກງານການສຶກສາຂັ້ນພື້ນຖານ. ການປະກອບສ່ວນທີ່ສໍາຄັນຂອງ ສະຫະພາບເອີຣົບ ໃນຈໍານວນເງິນ 11.5 ລ້ານ ເອີໂຣ ຈະຊ່ວຍໃຫ້ພວກເຮົາ ສາມາດບັນລຸຜົນສໍາເລັດຂອງແຜນງານບີຄວາໄດ້ຕາມເປົ້າໝາຍ - ເຊິ່ງເປົ້າໝາຍດັ່ງກ່າວແມ່ນ ເພື່ອຊ່ວຍໃຫ້ເດັກຍິງ ແລະ ເດັກຊາຍໝົດທຸກຄົນ ໂດຍສະເພາະແມ່ນເດັກນ້ອຍທີ່ດ້ອຍໂອກາດດ້ານການສຶກສາ ໄດ້ຮຽນຈົບການສຶກສາ ຂັ້ນພື້ນຖານທີ່ມີຄຸນນະພາບ, ສາມາດອ່ານອອກຂຽນໄດ້, ຄິດໄລ່ເລກເປັນ ແລະ ມີທັກສະຊີວິດທີ່ຈໍາເປັນ. ການຮ່ວມງານກັນໃນຄັ້ງນີ້ ຍັງເປັນບາດກ້າວອັນສໍາຄັນໃນການປະສານງານລະຫວ່າງຜູ້ໃຫ້ທຶນ. ພວກເຮົາ ມີຄວາມຍິນດີ ທີ່ ສະຫະພາບເອີຣົບ ແລະ ອົດສະຕຣາລີ ໄດ້ເປັນປະທານຮ່ວມຂອງໜ່ວຍງານວິຊາການຂະແໜງການສຶກສາ.

ໃນໄລຍະປີທໍາອິດຂອງການຈັດຕັ້ງປະຕິບັດແຜນງານດັ່ງກ່າວນີ້ ໄດ້ມີຜົນຮັບທີ່ໜ້າເພິ່ງພໍໃຈ. ນັກຮຽນຈໍານວນ 217 ຄົນ (ຂອງຈໍານວນທັງໝົດ 520 ຄົນ ທີ່ຢູ່ໃນແຜນງານ) ໄດ້ຮັບທຶນການສຶກສາຄູຊົນເຜົ່າ ແລະ ກໍາລັງສຶກສາຮໍ່າຮຽນຢູ່ ເພື່ອໃຫ້ກາຍເປັນຄູສອນທີ່ມີຄຸນວຸດທິ. ພວກເຮົາ ໄດ້ເລີ່ມຕົ້ນ ປັບປຸງຫຼັກສູດການຮຽນ-ການສອນຊັ້ນປະຖົມ ເຊິ່ງ ກະຊວງສຶກສາທິການ ແລະ ກິລາ ໄດ້ທົບທວນຄືນຫຼັກສູດ ຊັ້ນປະຖົມ, ປຶ້ມແບບຮຽນ ແລະ ຄູ່ມືຄູ ເພື່ອນໍາໃຊ້ໃນອີກ 6 ປີຂ້າງໜ້າ. ອາຄານໂຮງຮຽນ ໃນ ໂຮງຮຽນປະຖົມ 406 ແຫ່ງ ໄດ້ຖືກປັບປຸງ ເພື່ອຮັບປະກັນວ່າເດັກນ້ອຍ ມີສະພາບແວດລ້ອມໃນການຮໍ່າຮຽນ ທີ່ດີ ແລະ ປອດໄພ.

ຕາມທັດສະນະຂອງລັດຖະບານອົດສະຕຣາລີແລ້ວ, ກຸນແຈສໍາຄັນຂອງຄວາມສໍາເລັດດັ່ງກ່າວນີ້ ແມ່ນການ ເຮັດວຽກຮ່ວມກັນທີ່ມີຄຸນນະພາບ ຂອງບັນດາຄູ່ຮ່ວມງານ ເຊັ່ນພະນັກງານກະຊວງສຶກສາທິການ ແລະ ກິລາ ຢູ່ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ, ທີມງານຄຸ້ມຄອງແຜນງານບີຄວາ, ບັນດາຄູ່ຮ່ວມງານໃນກຸ່ມອົງການ NGO ແລະ ທີມງານຂອງຂ້າພະເຈົ້າເອງ ທີ່ຮັບຜິດ ຊອບວຽກງານ ການສຶກສາຢູ່ສະຖານທູດ. ນອກຈາກນີ້, ອົງການ ສະຫະປະຊາຊາດສໍາລັບເດັກ ແລະ ອົງການອາຫານໂລກ ກໍ່ຍັງເປັນສ່ວນສໍາຄັນໜຶ່ງ ຢູ່ໃນພາບລວມຂອງຜົນສໍາເລັດຂອງແຜນງານ ບີຄວາ ເຊິ່ງມີບົດບາດທີ່ສໍາຄັນ ໃນການຊ່ວຍປັບປຸງສະພາບແວດລ້ອມຂອງໂຮງຮຽນ ເພື່ອໃຫ້ເດັກນ້ອຍລາວ ໄດ້ເຂົ້າຮຽນ ແລະ ໄດ້ຮໍ່າຮຽນໃນໂຮງຮຽນ.

ຜົນສໍາເລັດຈາກການຮ່ວມມືດັ່ງກ່າວນີ້ ມີຄວາມສໍາຄັນຫຼາຍ ຕໍ່ກັບການເຮັດວຽກແບບໃໝ່ໃນຮູບແບບແຜນງານ ຂອງບີຄວາ. ຜົນສໍາເລັດໃນເບື້ອງຕົ້ນນີ້ ຖືວ່າດີຫຼາຍ.

ເບິ່ງໃນຫຼາຍໆດ້ານແລ້ວ ແຜນງານບີຄວາ ສະແດງໃຫ້ເຫັນເຖິງວິທີການເຮັດວຽກແບບໃໝ່ ເຊິ່ງແມ່ນການເຮັດວຽກ ແບບໃກ້ຊິດຕິດແທດກັບພະນັກງານຂອງກະຊວງໃນຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ເພື່ອສະໜັບສະໜູນວຽກງານຫຼັກຂອງກະຊວງ. ການຊີ້ນໍາ ແລະ ຄວາມເປັນເຈົ້າການ ຂອງກະຊວງ ຈະຮັບປະກັນຄວາມສໍາເລັດຂອງແຜນງານບີຄວາໃນໄລຍະຍາວ ແລະ ຈະຊ່ວຍໃຫ້ຜົນໄດ້ຮັບດ້ານການພັດທະນາດັ່ງກ່າວນີ້ ມີຄວາມຍືນຍົງຕໍ່ໄປ.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ສິ່ງທີ່ລັດຖະບານອົດສະຕຣາລີ ສາມາດປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໄດ້ດີທີ່ສຸດແມ່ນການພັດທະນາດ້ານການສຶກສາໃຫ້ດີຂຶ້ນ ສໍາລັບຄົນຮຸ່ນຕໍ່ໄປ ໃນອານາຄົດ, ໂດຍສະເພາະ ແມ່ນເດັກຍິງ.

ຈອນ ວິນລ້ຽມສ໌

ເອກອັກຄະລັດຖະທູດອົດສະຕຣາລີ ປະຈໍາ ສປປ ລາວ

## ຂໍ້ຄວາມຈາກ ສະຫະພາບເອີຣົບ



ຂ້າພະເຈົ້າຮູ້ສຶກດີໃຈ ແລະ ເປັນກຽດທີ່ຈະໄດ້ແບ່ງປັນ ວາລະສານຂ່າວສະບັບທໍາອິດກັບບັນດາທ່ານ ເຊິ່ງເປັນວາລະສານຂ່າວ ກ່ຽວກັບແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດການເຂົ້າຮຽນສໍາລັບການສຶກສາຂັ້ນພື້ນຖານ ຢູ່ ສປປ ລາວ ຫຼື ແຜນງານບີຄວາ (BEQUAL). ໂດຍການຮ່ວມມືກັບລັດຖະບານອົດສະຕຣາລີ, ລັດຖະບານແຫ່ງ ສປປ ລາວ ແລະ ການປະກອບສ່ວນຂອງບັນດາຄູ່ຮ່ວມງານຈາກພາກສ່ວນຕ່າງໆ, ຂ້າພະເຈົ້າ ເຊື່ອໝັ້ນທີ່ສຸດວ່າ ພວກເຮົາຈະສາມາດປັບປຸງຄຸນນະພາບການສຶກສາ ແລະ ຂະຫຍາຍໂອກາດການເຂົ້າຮຽນສໍາລັບການສຶກສາຂັ້ນພື້ນຖານ ຢູ່ 66 ເມືອງ ທີ່ດ້ອຍໂອກາດດ້ານການສຶກສາທີ່ສຸດໃນລາວໄດ້ ໂດຍການເພີ່ມອັດຕາການເຂົ້າຮຽນຂອງນັກຮຽນ, ປັບປຸງສະພາບແວດລ້ອມການຮຽນ-ການສອນ ແລະ ປັບປຸງຄຸນນະພາບຄູສອນ.

ທ່ານຈະເຫັນຫົວຂໍ້ຂ່າວທີ່ແຕກຕ່າງກັນ ແລະ ໜ້າສົນໃຈໃນການຈັດຕັ້ງປະຕິບັດກິດຈະກໍາລ້າສຸດ ພາຍໃຕ້ການດໍາເນີນງານ ຂອງແຜນງານບີຄວາ.

ດັ່ງທີ່ບັນດາທ່ານອາດຈະຮູ້ແລ້ວວ່າ ເຖິງແມ່ນວ່າການເຂົ້າເຖິງການສຶກສາຂັ້ນພື້ນຖານຈະດີຂຶ້ນເທື່ອລະກ້າວ ແຕ່ກໍ່ຍັງມີ ສິ່ງທ້າທາຍທີ່ຍັງຄົງຄ້າງຢູ່ ຍົກຕົວຢ່າງ: ອັດຕາລອດເຫຼືອຊັ້ນ ປ.5 ແມ່ນ 78.3% ໃນສົກປີ 2014/15, ເຊິ່ງຖືວ່າຍັງຕໍ່າກວ່າເປົ້າ ໝາຍສະຫະສະຫວັດດ້ານການພັດທະນາ ເປົ້າໝາຍທີ 2 ທີ່ຕັ້ງເປົ້າໄວ້ຢູ່ທີ່ 95% ໃນສົກປີ 2015 ແລະ ອັດຕາການເຂົ້າຮຽນໃນລະດັບມັດທະຍົມຕອນປາຍກໍ່ຍັງຕໍ່າຫຼາຍ ຢູ່ທີ່ 45.7% ໃນສົກປີ 2014/15 ແລະ ໃນປັດຈຸບັນກໍ່ຍັງມີເດັກນ້ອຍທີ່ມີເກນອາຍຸເຂົ້າໂຮງຮຽນ ຈໍານວນຫຼາຍທີ່ຍັງບໍ່ໄດ້ເຂົ້າໂຮງຮຽນ.

ພວກເຮົາ ເຂົ້າໃຈເຖິງບົດບາດອັນສໍາຄັນຂອງການສຶກສາຂັ້ນພື້ນຖານ ແລະ ເຂົ້າໃຈວ່າມັນເປັນໄລຍະກະກຽມຄວາມຮູ້ພື້ນຖານທີ່ເປັນການ ສົ່ງເສີມນັກຮຽນໃຫ້ຮູ້ຈັກການຄິດໄລ່, ຮູ້ໜັງສື ແລະ ມີທັກສະໃນການດໍາລົງຊີວິດ ເຊິ່ງເປັນສິ່ງທີ່ຈໍາເປັນຕໍ່ຄວາມສໍາເລັດຂອງທຸກໆສັງຄົມ.

ຂ້າພະເຈົ້າ ຂໍເນັ້ນໜັກຕື່ມອີກວ່າ ການສຶກສາແມ່ນໜຶ່ງໃນສາມຂະແໜງບູລິມະສິດ ໃນຍຸດທະສາດການຮ່ວມມືດ້ານການພັດທະນາຂອງ ສະຫະພາບເອີຣົບ ສໍາລັບ ສປປ ລາວ ໃນສົກປີ 2014–2020.

ຂ້າພະເຈົ້າ ເຊື່ອໝັ້ນວ່າ ການສຶກສາທີ່ມີຄຸນນະພາບ ຈະເປັນຕົວຂັບເຄື່ອນການພັດທະນາທີ່ເຂັ້ມແຂງ ແລະ ຍືນຍົງ, ເຮັດໃຫ້ເສດຖະກິດຂະຫຍາຍຕົວ ແລະ ຈະເປັນອົງປະກອບທີ່ສໍາຄັນໃນການແກ້ໄຂບັນຫາຄວາມທຸກຍາກ. ໂດຍການເຮັດວຽກຮ່ວມກັບຄູ່ຮ່ວມງານຂອງພວກເຮົາ ກໍ່ຄື ລັດຖະບານ ອົດສະຕຣາລີ ແລະ ກະຊວງສຶກສາທິການ ແລະ ກິລາ, ແຜນງານບີຄວາ ຈະຊ່ວຍປະເທດລາວ ໃນການເສີມສ້າງຂີດຄວາມສາມາດຂອງຊັບພະຍາກອນມະນຸດ ເພື່ອການເຊື່ອມໂຍງປະເທດ ເຂົ້າກັບປະຊາຄົມເສດຖະກິດຂອງພາກພື້ນ ແລະ ຂອງສາກົນ.

ຂ້າພະເຈົ້າ ຫວັງຢ່າງຍິ່ງວ່າ ຂໍ້ມູນຂ່າວສານທີ່ຢູ່ໃນວາລະສານຂ່າວດັ່ງກ່າວນີ້ ຈະເປັນປະໂຫຍດ ແລະ ໜ້າສົນໃຈ ສໍາລັບທ່ານ.

ທ່ານ ເລໂອ ຟາແບ໋ກ

ເອກອັກຄະລັດຖະທູດ ສະຫະພາບເອີຣົບ ປະຈໍາ ສປປ ລາວ

# ແຜນງານບີຄວາ ຖືກເຜີຍແຜ່ໃນຂ່າວເດີກາດ້ຽນ




COSMOS (Coffey Spatial Mobile Solution) **ແມ່ນເຄື່ອງມື ເກັບກຳ ແລະ ລາຍງານຂໍ້ມູນຢ່າງເປັນລະບົບ ເຊິ່ງສາມາດສະແດງຜົນສຳຫຼວດທີ່ສົມບູນເທິງແຜນທີ່ ແລະ ເບິ່ງຂໍ້ມູນໄດ້ຢ່າງລະອຽດແມ່ນຍຳ**

ການນຳໃຊ້ນະວັດຕະກຳເຕັກໂນໂລຊີທີ່ສ້າງສັນຂອງແຜນງານບີຄວາ ໄດ້ຮັບການຕີພິມລົງໃນໜັງສືພິມ ເດີກາດ້ຽນ (The Guardian) ສະບັບເດືອນກຸມພາ ໃນຄໍລຳ ກ່ຽວກັບຄູ່ຮ່ວມພັດທະນາ ໃນຫົວຂໍ້ວ່າ "ເປົ້າໝາຍ ການພັດທະນາແບບຍືນຍົງທີ 18 ທີ່ບໍ່ເປັນທາງການແມ່ນຫຍັງ? ແມ່ນຂໍ້ມູນຂ່າວສານ" (The unofficial 18th SDG? It's information). ໂປຣແກຣມໂກສໂມສ (COSMOS), ເປັນລະບົບເກັບກຳຂໍ້ມູນ ທີ່ຖືກພັດທະນາຂຶ້ນໂດຍບໍລິສັດ ຄ໋ອບຟີ ເຊິ່ງເປັນຜູ້ຄຸ້ມຄອງແຜນງານບີຄວາ ເຊິ່ງຕາງໜ້າໃຫ້ແກ່ລັດຖະບານອົດສະຕຣາລີ ໄດ້ສະແດງໃຫ້ເຫັນວ່າ ເຕັກໂນໂລຊີດັ່ງກ່າວນີ້ ສາມາດຊ່ວຍແກ້ໄຂບັນຫາ ໃນການປະເມີນຄວາມຄືບໜ້າຂອງເປົ້າໝາຍ ການພັດທະນາແບບຍືນຍົງ ທີ 17 ຂອງສະຫະປະຊາຊາດ (SDGs). ເນື້ອໃນບາງຕອນ ຈາກຫົວຂໍ້ຂ່າວດັ່ງກ່າວ ແມ່ນມີດັ່ງລຸ່ມນີ້.

"ລະບົບດັ່ງກ່າວ ສາມາດບັນທຶກສຽງ ແລະ ຮູບຖ່າຍ ເພື່ອໃສ່ເຂົ້າໃນຂໍ້ມູນ ຂອງແຕ່ລະໂຮງຮຽນໄດ້, ແລະເປັນເຄື່ອງມືທີ່ມີຄວາມສຳຄັນ ຕໍ່ກັບທ່ານ ແອນດຣິວ ວິນລາດສ, ຊ່ຽວຊານດ້ານພື້ນຖານໂຄງລ່າງ ຜູ້ເຮັດວຽກກັບແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນ ສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (BEQUAL) ເຊິ່ງຕາງໜ້າໃຫ້ແກ່ລັດຖະບານອົດສະຕຣາລີ. ແຜນງານດັ່ງກ່າວນີ້ແມ່ນພະຍາຍາມຊອກຫາວິທີທາງເພື່ອ ປັບປຸງຄຸນນະພາບການສຶກສາຂັ້ນພື້ນຖານຂອງເດັກນ້ອຍ ໂດຍສະເພາະແມ່ນເດັກນ້ອຍທີ່ທຸກຍາກ ແລະ ດ້ອຍໂອກາດ. ທີມງານຂອງແຜນງານດັ່ງກ່າວ ໄດ້ນຳໃຊ້ໂປຣແກຣມ COSMOS ໃນການເກັບກຳ ແລະ ລວບລວມຂໍ້ມູນ ເຊິ່ງປະກອບດ້ວຍຮູບພາບ ຫຼາຍກວ່າ 40,000 ພາບ ຈາກໂຮງຮຽນໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກຂອງ ລາວ.

ທ່ານ ແອນດຣິວ ວິນລາດສ ອະທິບາຍວ່າ: "ໂປຣແກຣມ COSMOS ຍັງຊ່ວຍໃຫ້ພະນັກງານຢູ່ພາກສະໜາມ ສາມາດລະບຸຕຳແໜ່ງໂຮງຮຽນ ແລະ ບັນທຶກວັນທີ ໃສ່ໃນຮູບພາບ ແລະ ບົດລາຍງານຈາກໂຮງຮຽນ ທີ່ຢູ່ຫ່າງໄກສອກຫຼີກ ໄດ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນ ແລະ ສາມາດເຊື່ອມຕໍ່ຂໍ້ມູນຂ່າວສານດັ່ງກ່າວ ເຂົ້າໃນຖານຂໍ້ມູນ (cloud database)". ທ່ານ ຍັງບອກຕື່ມອີກວ່າ: "ນອກຈາກຈະຊ່ວຍໃຫ້ສາມາດເຂົ້າເຖິງຂໍ້ມູນພາກສະໜາມ ເພື່ອວິເຄາະຂໍ້ມູນ ໄດ້ໄວຂຶ້ນແລ້ວ, ລະບົບ ດັ່ງກ່າວນີ້ຍັງສາມາດໃຊ້ເພື່ອຮັບປະກັນຕໍ່ຜູ້ໃຫ້ທຶນ ຂອງພວກເຮົາວ່າ ໜ້າວຽກທີ່ໄດ້ຮັບການອະນຸມັດໃຫ້ຈັດຕັ້ງປະຕິບັດ ຢູ່ໃນໂຮງຮຽນເປົ້າໝາຍນັ້ນ ໄດ້ປະຕິບັດສຳເລັດຮຽບຮ້ອຍແລ້ວ."

ທ່ານ ນ. ແອນ ສະເຕສີນົບສກີ້, ຜູ້ບໍລິຫານໂຄງການ ຮັບຜິຊອບແຜນງານບີຄວາ ກ່າວວ່າ: ທຸກສິ່ງ ແມ່ນເກີດຂຶ້ນຢ່າງທ່ວງທັນການ. "ເວລາທີ່ໄດ້ຮັບຂໍ້ມູນ ໂດຍຜ່ານໂປຣແກຣມ COSMOS ຈະຊ່ວຍໃຫ້ພວກເຮົາ ໄດ້ປຽບ ໃນຂັ້ນຕອນການຕັດສິນໃຈ ເຊິ່ງຊ່ວຍໃຫ້ພວກເຮົາ ສາມາດຕອບສະໜອງຄວາມຕ້ອງການຂອງຊຸມຊົນ ໄດ້ຢ່າງທັນການ ... ແລະ ສາມາດ ປະເມີນຜົນໄດ້ຮັບໄດ້ຢ່າງວ່ອງໄວ. "ເວລາພວກເຮົາ ປະເມີນຜົນໄດ້ຮັບຂອງກິດຈະກຳໃດໜຶ່ງ ເຊັ່ນການສ້ອມແປງໂຮງຮຽນຄືນໃໝ່, ພວກເຮົາສາມາດໃຊ້ໂປຣແກຣມ COSMOS ໃນການປະເມີນຜົນໄດ້ຮັບດ້ານການສຶກສາ ທີ່ມີຕໍ່ກັບນັກຮຽນ ໄດ້ຢ່າງວ່ອງໄວ; ຍົກຕົວຢ່າງ: ອາຄານທີ່ຖືກປັບປຸງໃໝ່ດັ່ງກ່າວ ໄດ້ເຮັດໃຫ້ຈຳນວນນັກຮຽນມາລົງທະບຽນຮຽນ ແລະ ມາເຂົ້າຮຽນ ເພີ່ມຂຶ້ນຫຼືບໍ່?"




# ສົ່ງເສີມການເຂົ້າໂຮງຮຽນ ແລະ ຄວາມມັກຮັກໃນການຮຽນຮູ້



ໃນເຂດຊົນນະບົດ, ແນວຄິດທັດສະນະຄະຕິທາງດ້ານວັດທະນະທຳ ແລະ ສັງຄົມ ອາດເປັນກຳແພງກີດຂວາງ ໃຫ້ແກ່ການສຶກສາຂອງເດັກນ້ອຍໄດ້. ເດັກນ້ອຍບາງຄົນ ໂດຍສະເພາະແມ່ນເດັກຍິງ ຕ້ອງໄດ້ຢູ່ບ້ານ ເພື່ອເບິ່ງແຍງຄອບຄົວຂອງພວກເຂົາ. ແຜນງານບີຄວາ ໄດ້ອອກແບບກອງທຶນການປ່ຽນແປງໃໝ່ທາງດ້ານການພັດທະນາການສຶກສາ ເພື່ອກະຕຸກຊຸກຍູ້ ວິທີການເຮັດວຽກແບບໃໝ່ໆ ເພື່ອປັບປຸງການສຶກສາຂັ້ນພື້ນຖານໃຫ້ໄດ້ຮັບຜົນດີຂຶ້ນ.

ໜຶ່ງໃນຜູ້ທີ່ໄດ້ຮັບທຶນຊ່ວຍເຫຼືອຜູ້ທຳອິດ ແມ່ນບໍລິສັດ Clay House Studio, ເຊິ່ງເປັນ ບໍລິສັດຂອງລາວ. ບໍລິສັດ Clay House Studio ຈະສ້າງຮູບເງົາກາຕູນ ທີ່ໃຊ້ດິນປັ້ນ ເພື່ອສອນເດັກນ້ອຍກ່ຽວກັບ ການອ່ານການຂຽນ ແລະ ການນັບເລກ, ເຊິ່ງມີບາງຕອນ ຈະຖືກອອກອາກາດຜ່ານທາງໂທລະພາບ.

ຮູບແບບການສອນດັ່ງກ່າວນີ້ ໄດ້ຖືກອອກແບບມາ ເພື່ອໃຫ້ ເດັກນ້ອຍສາມາດເຂົ້າເຖິງ ການຮຽນການສອນ ໂດຍຜ່ານທາງຮູບເງົາກາຕູນທີ່ມີສີສັນສົດໃສ, ແນວຄວາມຄິດບວກ ແລະ ເປັນມິດກັບເດັກນ້ອຍ ເຊິ່ງຈະອອກອາກາດທາງໂທລະພາບສູ່ມວນຊົນ. ນີ້ແມ່ນແນວຄວາມຄິດໃໝ່ ຍ້ອນມັນເປັນການນຳໃຊ້ຮູບແບບ 'ການສຶກສາແບບບັນເທີງ' – ເປັນວິທີການສື່ ຂໍ້ຄວາມດ້ານການສຶກສາ ແບບບັນເທີງ ແກ່ເດັກນ້ອຍ ເພື່ອໃຫ້ເຂົາເຈົ້າສົນໃຈຮຽນຮູ້. ຮູບແບບດັ່ງກ່າວນີ້ ໄດ້ຮັບການພັດທະນາ ແລະ ປະສົບຜົນສຳເລັດ ຢູ່ຫຼາຍປະເທດເຊັ່ນ ເກົາຫຼີ, ຍີ່ປຸ່ນ, ອາເມລິກາ, ການາດາ, ອົດສະຕຣາລີ, ບຣາຊິນ ແລະ ບາງປະເທດໃນເອີຣົບ ແຕ່ວ່າ ຍັງບໍ່ຄ່ອຍຖືກນຳໃຊ້ຢ່າງແຜ່ຫຼາຍຢູ່ໃນເຂດອາຊີຕາເວັນອອກສ່ຽງໃຕ້.

ຈຸດປະສົງ ຂອງວຽກນີ້ແມ່ນເພື່ອແນໃສ່ສ້າງແຮງຈູງໃຈ ໃຫ້ເດັກນ້ອຍ ຢາກໄປໂຮງຮຽນ ແລະ ເພີ່ມຄວາມເຂົ້າໃຈເຖິງຄວາມສຳຄັນຂອງ ການເຂົ້າໂຮງຮຽນຫຼາຍຂຶ້ນ ເຊິ່ງຈະຊ່ວຍໃຫ້ເດັກນ້ອຍມາໂຮງຮຽນເປັນປົກກະຕິຂຶ້ນ ໂດຍສະເພາະແມ່ນເດັກນ້ອຍ ທີ່ຕ້ອງໄດ້ຊ່ວຍວຽກຢູ່ເຮືອນ ແລະ ເຮັດໄຮ່ເຮັດສວນ ເພື່ອຊ່ວຍເຫຼືອຄອບຄົວ. ຮູບເງົາກາຕູນແຕ່ລະເລື່ອງ ຈະມີຊຸດປຶ້ມປະກອບ ເຊັ່ນ: ປຶ້ມເລື່ອງ, ປຶ້ມບົດຝຶກຫັດ ແລະ ຄູ່ມືຄູ.

ນອກຈາກນີ້, ມັນຍັງຈະເປັນການປູກຈິດສຳນຶກ ກ່ຽວກັບຄວາມສຳຄັນຂອງການຮູ້ໜັງສື - ເຊິ່ງເນັ້ນໜັກເຖິງຄວາມສຳຄັນ ແລະ ຈຳເປັນຂອງການຮຽນ ເພື່ອໃຫ້ຮູ້ອ່ານ ແລະ ຮູ້ຂຽນ ແລະ ຮູ້ພັດທະນາທັກສະການດຳລົງຊີວິດໃນແຕ່ລະມື້ ບໍ່ວ່າຈະເປັນ ເລື່ອງໂພຊະນາການ, ການລ້ຽງສັດ, ເລື່ອງສຸຂະພາບ, ຄວາມປອດໄພ ແລະ ສຸຂະອະນາໄມ. ຮູບເງົາກາຕູນນີ້ ຍັງສາມາດຊ່ວຍໃນການສອນຄຳສັບ ພາສາລາວ, ປະໂຫຍກ ແລະ ການສະກົດຄຳ ພ້ອມກັນນັ້ນ ມັນຍັງເປັນການກະຕຸກຊຸກຍູ້ໃຫ້ເດັກນ້ອຍມີຈິດໃຈທີ່ເຕັມໄປດ້ວຍຄວາມຫ້າວຫັນ ແລະ ຢາກຮຽນຮູ້ ແລະ ຍັງຊ່ວຍໃຫ້ພວກເຂົາ ເປີດໃຈຮັບເອົາເດັກນ້ອຍ ທີ່ດ້ອຍໂອກາດເຊັ່ນເດັກພິການ ແລະ ເດັກນ້ອຍທີ່ມາຈາກຄອບຄົວທຸກຍາກນຳອີກ.

ມີການຄາດຄະເນໄວ້ວ່າ: ຮູບເງົາກາຕູນດັ່ງກ່າວນີ້ ຈະອອກອາກາດໃນທ້າຍປີ 2017.

# ຄູທ້ອງຖິ່ນ ແມ່ນກຸນແຈສຳຄັນທີ່ຈະເຮັດໃຫ້ການສຶກສາ ລາວ ປະສົບຜົນສຳເລັດໄດ້

ການປັບປຸງຄຸນນະພາບການຮຽນ-ການສອນຢູ່ໃນໂຮງຮຽນ ແລະ ສະຖາບັນສ້າງຄູ, ໂດຍສະເພາະແມ່ນຢູ່ເຂດຫ່າງໄກສອກຫຼີກ ແມ່ນເປົ້າໝາຍຫຼັກຂອງແຜນງານບີຄວາ.

ຈຸດປະສົງອັນໜຶ່ງ ແມ່ນເພື່ອເພີ່ມຈຳນວນຄູຊົນເຜົ່າ, ໂດຍສະເພາະແມ່ນຈຳນວນຄູຜູ້ຍິງ, ທີ່ສອນຢູ່ເຂດຊົນນະບົດ. ແນວຄວາມຄິດ "ຄູທ້ອງຖິ່ນ ຫຼື ຄູທີ່ສອນຢູ່ບ້ານຂອງຕົນເອງ" ແມ່ນຖືເປັນ ແນວຄວາມຄິດທີ່ມີຄວາມສຳຄັນຢ່າງຍິ່ງ ໃນສະພາບການສຶກສາຂອງລາວ. ຄູທ້ອງຖິ່ນຈະເປັນທາງອອກທີ່ມີຄວາມຍືນຍົງ ໃຫ້ແກ່ສາມບັນຫາໃຫຍ່ໆ ຂອງລະບົບການສຶກສາໄດ້.

ດ້ານທີໜຶ່ງ, ຄູທ້ອງຖິ່ນ ຈະສອນປະຈຳຢູ່ທ້ອງຖິ່ນຂອງຕົນເອງ ສະນັ້ນຈະຊ່ວຍຫຼຸດຜ່ອນການຂາດເຂີນຄູ ແລະ ຫຼຸດຜ່ອນ ການຊັບຊ້ອນພະນັກງານຄູທີ່ມີຢູ່ເລື້ອຍໆໃນເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ. ດ້ານທີສອງ, ຄູຊົນເຜົ່າສາມາດເປັນຕົວແບບໃຫ້ແກ່ນັກຮຽນຊົນເຜົ່າຄົນອື່ນໆ ຢູ່ໃນເຂດທີ່ບໍ່ຄ່ອຍມີນັກຮຽນຊົນເຜົ່າປະສົບຄວາມສຳເລັດຫຼາຍປານໃດ ແລະ ກະຕຸກຊຸກຍູ້ ພວກເຂົາ ໃຫ້ປະສົບຄວາມສຳເລັດ.

ດ້ານທີສາມ, ຄູທ້ອງຖິ່ນທີ່ເປັນຄົນຊົນເຜົ່າ ມີຄວາມເຂົ້າໃຈດ້ານພາສາ ແລະ ວັດທະນາທຳຂອງ ນັກຮຽນຊົນເຜົ່າໄດ້ດີກວ່າ. ສິ່ງດັ່ງກ່າວນີ້ ຈະເຮັດໃຫ້ການຮຽນ-ການສອນມີຄຸນນະພາບດີຂຶ້ນ ແລະ ຊ່ວຍດຶງດູດໃຫ້ນັກຮຽນ ສືບຕໍ່ຢາກມາຮຽນຢູ່ໂຮງຮຽນຫຼາຍຂຶ້ນ.

ແຜນງານບີຄວາ ໃຫ້ການສະໜັບສະໜູນນັກຮຽນຄູຊົນເຜົ່າຈຳນວນ 520 ຄົນ ເຊິ່ງສອງໃນສາມແມ່ນຜູ້ຍິງ ໂດຍໄດ້ສະໜອງທຶນການສຶກສາ ເພື່ອໃຫ້ເຂົາເຈົ້າໄດ້ເຂົ້າຮຽນຫຼັກສູດຄູ ເພື່ອກັບຄືນໄປສອນທີ່ໂຮງຮຽນປະຖົມ ຢູ່ບ້ານຂອງຕົນ.

ສຳລັບນັກຮຽນທີ່ໄດ້ຮັບການຊ່ວຍເຫຼືອຈາກແຜນງານບີຄວານັ້ນ, ຫຼັກສູດການຮຽນດັ່ງກ່າວ ເປັນສິ່ງທ້າທາຍໜຶ່ງ ສຳລັບພວກເຂົາ ແຕ່ກໍ່ເປັນໂອກາດທີ່ດີ ເຊິ່ງມັນເປັນອີກບາດກ້າວຊີວິດອັນໜຶ່ງທີ່ມີຄວາມທ້າທາຍ ສຳລັບຄົນໜຸ່ມສາວເຫຼົ່ານີ້.

ນັກຮຽນຄູຊົນເຜົ່າສ່ວນໃຫຍ່ແມ່ນມາຈາກຄອບຄົວທີ່ທຸກຍາກ ທີ່ອາໃສການຜະລິດກະສິກຳແບບພໍພຽງເປັນອາຊີບ ແລະ ພວກເຂົາ ໃຫ່ຍຂຶ້ນມາໃນເຂດ ທີ່ມັກຈະອຶດເຂົ້າກິນໃນແຕ່ລະປີ. ນັກຮຽນສ່ວນໃຫຍ່ແມ່ນມາຈາກຄອບຄົວໃຫ່ຍ ທີ່ມີລູກ ເຈັດຫາ ແປດຄົນ ຫຼື ບາງຄັ້ງ ເກົ້າຄົນ. ນັກຮຽນບາງຄົນ ເປັນອ້າຍ/ເອື້ອຍ ກົກ ແລະ ບາງຄົນກໍ່ເປັນນ້ອງສາວ/ຊາຍຫຼ້າ. ມີຫຼາຍຄົນ ໄດ້ສູນເສຍພໍ່ ຫຼື ແມ່. ມີບາງຄົນເສຍທັງພໍ່ ທັງ ແມ່.

ບັນດານັກຮຽນເຫຼົ່ານີ້ ເມື່ອມາເຖິງວິທະຍາໄລຄູ ແລະ ເທດສະບານແຂວງ ກໍ່ຕື່ນຕາຕື່ນໃຈໄປກັບ ອາຄານສະຖານທີ່, ຖະໜົນຫົນທາງ, ຍານພາຫະນະ ແລະ ພື້ນຖານໂຄງລ່າງຕ່າງໆ. ກວ່າຈະເດີນທາງໄປຮອດວິທະຍາໄລຄູ, ພວກເຂົາເຈົ້າຕ້ອງໃຊ້ເວລາເດີນທາງສອງມື້ ດ້ວຍເຮືອ, ລົດໄຖ, ລັດຈັກ ຫຼື ລົດເມ ຫຼື ບາງຄັ້ງກໍ່ຕ້ອງໄດ້ຍ່າງຂ້າມພູຜາປ່າດົງ ແລະ ຂ້າມແມ່ນ້ຳດ້ວຍຂົວອູ່ທີ່ກວາຍໂຍກເຍກ. ພວກເຂົາ ໄດ້ກ້າວເຂົ້າມາສູ່ໂລກໃໝ່ອີກໂລກໜຶ່ງທີ່ແຕກຕ່າງຈາກບ້ານຂອງຕົນ.

ນັກຮຽນບາງຄົນ ຕ້ອງໄດ້ຍ່າງຫຼາຍກິໂລແມັດຕໍ່ມື້ ເພື່ອໄປເຂົ້າໂຮງຮຽນມັດທະຍົມຢູ່ບ່ອນອື່ນ, ນັກຮຽນບາງຄົນ ຕ້ອງໄດ້ຍ່າງແບກເປົ້າເຂົ້າໄປໄກເປັນ 10 ກິໂລແມັດ ແລະ ຍ່າງກັບມາບ້ານໃນທ້າຍອາທິດ, ບາງຄົນແມ່ນພັກຢູ່ກັບພີ່ນ້ອງທີ່ຢູ່ໃກ້ໂຮງຮຽນ ແລະ ພວກເຂົາ ກໍ່ຕ້ອງເຮັດວຽກເຮືອນ ທຸກຢ່າງຊ່ວຍພີ່ນ້ອງ ເຊັ່ນ: ແຕ່ງກິນ ແລະ ທຳຄວາມສະອາດບ້ານ ພ້ອມກັນນັ້ນ ກໍ່ຕ້ອງ ຮຽນໜັງສືຢ່າງໜັກ  ຍ້ອນຕ້ອງຮຽນເປັນພາສາລາວ ເຊິ່ງເປັນພາສາທີສອງ, ທີສາມ ຫຼື ພາສາທີສີ່ ສຳລັບພວກເຂົາ.

**ເຖິງຢ່າງໃດກໍ່ດີ, ນັກຮຽນຄູຂອງແຜນງານບີຄວາ ກໍ່ສາມາດຂ້າມຜ່ານອຸປະສັກເຫຼົ່ານັ້ນໄດ້. ນັກຮຽນບາງຄົນ ຕ້ອງໃຊ້ເວລາຍ່າງໜຶ່ງຊົ່ວໂມງ ເພື່ອໄປເຂົ້າໂຮງຮຽນປະຖົມທີ່ຢູ່ໄກ້ທີ່ສຸດ. ນັກຮຽນສ່ວນໃຫຍ່ ແມ່ນມາຈາກ ໝູ່ບ້ານທີ່ບໍ່ມີໂຮງຮຽນມັດທະຍົມ. ບາງບ່ອນ ໂຮງຮຽນມັດທະຍົມກໍ່ຢູ່ຫ່າງໄກເຖິງ 80 ກິໂລແມັດ ທີ່ມີສະພາບເສັ້ນທາງທີ່ຫຍຸ້ງຍາກລຳບາກ.**

ສຳລັບນັກຮຽນບາງຄົນ, ພວກເຂົາ ເປັນນັກຮຽນຄົນທຳອິດໃນບ້ານນັ້ນທີ່ຈົບການສຶກສາຊັ້ນມັດທະຍົມຕອນຕົ້ນ. ບາງຄົນ ຕ້ອງໄດ້ແບກຮັບຄວາມຄາດຫວັງຂອງຄົນທັງໝູ່ບ້ານ. ມີຫຼາຍຄົນໄດ້ຮັບແຮງບັນດານໃຈໃນການ ຊ່ວຍເຫຼືອຄົນອື່ນໃຫ້ຫຼຸດພົ້ນອອກຈາກວົງຈອນຂອງຄວາມທຸກຍາກ ໂດຍການກັບຄືນໄປເປັນຄູສອນຢູ່ບ້ານເກີດເມືອງນອນຂອງຕົນທີ່ຢູ່ໃນເຂດຫ່າງໄກສອກຫຼີກ ເພື່ອພັດທະນາຕົນເອງ ແລະ ຊຸມຊົນ.

ບາງຄັ້ງນັກຮຽນເຫຼົ່ານີ້ກໍ່ຄິດຮອດບ້ານ. ແຕ່ເມື່ອ ພວກເຂົາ ຄິດເຫັນພໍ່ແມ່ ແລະ ອ້າຍເອື້ອຍນ້ອງ ທີ່ກຳລັງເຮັດວຽກຢ່າງໜັກໜ່ວງ ຕາກແດດຢູ່ກາງທົ່ງນາ ແຕ່ກໍ່ບໍ່ສາມາດໃຊ້ລ້ຽງຄອບຄົວໄດ້ໝົດປີ, ສິ່ງດັ່ງກ່າວ ກໍ່ໄດ້ສ້າງກຳລັງໃຈ ເພື່ອໃຫ້ພວກເຂົາ ສູ້ຊົນຕໍ່ໄປ. ພວກເຂົາເບິ່ງໄປຮອບໆຕົວ ແລະ ເຫັນສິ່ງທີ່ໄດ້ຮັບຈາກທຶນການສຶກສາ ເຊັ່ນ: ຊຸດນັກຮຽນໃໝ່, ເກີບໃໝ່ຄູ່ທຳອິດສຳລັບບາງຄົນ, ເງິນຊື້ເຂົ້າກິນ, ປຶ້ມ ແລະ ອຸປະກອນການຮຽນ; ເງິນຄ່າເດີນທາງກັບບ້ານ ພາຍຫຼັງທີ່ເສັງແລ້ວໃນແຕ່ລະພາກຮຽນ, ນອກຈາກນີ້, ພວກເຂົາ ກໍ່ຮູ້ດີວ່າ ຖ້າເຈັບເປັນ ພວກເຂົາຈະໄດ້ຮັບການປິ່ນປົວດ້ວຍເງິນປະກັນສຸຂະພາບ. ໃນທ້າຍທີ່ສຸດ, ພາຍຫຼັງທີ່ສຳເລັດການສຶກສາແລ້ວ, ພວກເຂົາກໍ່ຈະກາຍເປັນຄູປະຖົມທີ່ມີຄວາມສາມາດ.

ນີ້ແມ່ນສິ່ງທ້າທາຍໜຶ່ງ ທີ່ພວກເຂົາ ຈະຕ້ອງໄດ້ອົດທົນ ແລະ ກ້າວຜ່ານໃຫ້ໄດ້!





ຈາກຊ້າຍ ຫາ ຂວາ, ທ້າວ ຫຼ້າ ຈະ ຍາ, ທ້າວ ຂາວ ໄທປະເສີດ, ນາງ ແກ່ນ ແກ້ວມະນີ, ນາງ ລິດດາວັນ ສິດທິວົງ  ແລະ ທ້າວ ອາສາ ເຊເຈີຕູ້ ໄດ້ແລກປ່ຽນປະສົບການ ແລະ ຄວາມຄາດຫວັງ ຈາກການຮຽນຢູ່ວິທະຍາໄລສ້າງຄູຫຼວງນ້ຳທາ.

"ທຶນການສຶກສານີ້ ບໍ່ພຽງແຕ່ໃຫ້ການສະໜັບສະໜູນ ການສຶກສາຮ່ຳຮຽນຂອງຂ້ອຍເທົ່ານັ້ນ, ແຕ່ທຶນການສຶກສາດັ່ງກ່າວນີ້ ຍັງສະໜອງທີ່ພັກ, ການປະກັນສຸຂະພາບ, ຄ່າເດີນທາງ ແລະ ສິ່ງຂອງທີ່ຈຳເປັນອື່ນໆ ນຳອີກ."

**ຫຼ້າ ຈະ ຍາ**

"ຂ້ອຍ ຮູ້ສຶກພາກພູມໃຈຫຼາຍ ທີ່ຂ້ອຍ ສາມາດສືບຕໍ່ຮຽນ ເພື່ອໄດ້ເປັນຄູ. ພໍ່ແມ່ຂອງຂ້ອຍ ທີ່ບໍ່ສາມາດສິ່ງເສຍ ໃຫ້ຂ້ອຍໄດ້ຮຽນ ກໍ່ຮູ້ສຶກພູມໃຈໃນຕົວຂ້ອຍເຊັ່ນດຽວກັນ."

**ນາງ ແກ່ນ ແກ້ວມະນີ**

"ໂຮງຮຽນປະຖົມທີ່ບ້ານຂອງຂ້ອຍ ມີຄູສອນບໍ່ພຽງພໍ. ດັ່ງນັ້ນ, ຂ້ອຍ ຈຶ່ງຮູ້ສຶກດີໃຈຫຼາຍທີ່ໄດ້ສຶກສາຮ່ຳຮຽນ ເພື່ອ ເປັນຄູຢູ່ທີ່ວິທະຍາໄລສ້າງຄູ. ຂ້ອຍ ຈະກັບຄືນໝູ່ບ້ານຂອງຂ້ອຍເພື່ອໄປສອນ ທີ່ໂຮງຮຽນຢູ່ບ້ານຂອງຂ້ອຍ."

**ທ້າວ ອາສາ ເຊເຈີຕູ້**

"ຂ້ອຍມີໂອກາດ ໄດ້ພົບກັບໝູ່ຄູ່ທີ່ມາຈາກຊົນເຜົ່າອື່ນໆ. ພວກເຮົາ ກາຍເປັນໝູ່ທີ່ອຸ້ມຊູຊ່ວຍເຫຼືອກັນ. ນອກຈາກນີ້, ພວກເຮົາຍັງໄດ້ຮຽນຮູ້ກ່ຽວກັບວັດທະນະທຳ ແລະ ພາສາໃໝ່ໆ."

**ທ້າວ ຂາວ ໄທປະເສີດ**

"ທຶນການສຶກສາດັ່ງກ່າວນີ້ ໄດ້ຊ່ວຍໃຫ້ຂ້ອຍສາມາດສືບຕໍ່ການສຶກສາ ແລະ ສາມາດ ພັດທະນາທັກສະຂອງຂ້ອຍໃນຂັ້ນຕໍ່ໄປໄດ້. ຂ້ອຍດີໃຈຫຼາຍ ທີ່ທຶນການສຶກສາດັ່ງກ່າວນີ້ ມາເຖິງຊຸມຊົນຊົນເຜົ່າທີ່ຢູ່ຫ່າງໄກສອກຫຼີກຂອງພວກເຮົາ."

**ນາງ ລິດດາວັນ ສິດທິວົງ**

“ຮັບປະກັນ ການສຶກສາຮຽນຮ່ວມ ແລະ ຄຸນນະພາບດ້ານການສຶກສາ ທີ່ເທົ່າທຽມກັນ ແລະ ສະໜັບສະໜູນ ການຮຽນຮູ້ຕະຫຼອດຊີວິດ ສຳລັບ ໝົດທຸກຄົນ.”

ເປົ້າໝາຍທີ 4 ຂອງ ເປົ້າໝາຍ ເພື່ອການພັດທະນາທີ່ຍືນຍົງ



# ການສຶກສາຮຽນຮ່ວມ: ຊ່ວຍເຮັດໃຫ້ເດັກນ້ອຍ ໄປເຂົ້າໂຮງຮຽນຫຼາຍຂຶ້ນ

ໃນປີ 2010, ໄດ້ມີການສ້າງນະໂຍບາຍທີ່ສຳຄັນໜຶ່ງຂຶ້ນມາ ຢູ່ ສປປ ລາວ ເຊິ່ງນັ້ນແມ່ນ ນະໂຍບາຍແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ ເຊິ່ງຖືກລົງນາມ ຮັບຮອງໂດຍ ນາຍົກລັດຖະມົນຕີ ແລະ ໃນປີ 2011 ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ກໍ່ໄດ້ລົງນາມ ຮັບຮອງເອົາ ແຜນຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ ສົກປີ 2011-2015.

ການສຶກສາຮຽນຮ່ວມ ແມ່ນການປັບປ່ຽນລະບົບການສຶກສາ ເພື່ອໃຫ້ເໝາະສົມກັບນັກຮຽນ ບໍ່ແມ່ນການປັບນັກຮຽນເຂົ້າກັບລະບົບ. ການສຶກສາຮຽນຮ່ວມ ແມ່ນການສົ່ງເສີມແນວຄວາມຄິດທີ່ວ່າ ມັນເປັນໄປບໍ່ໄດ້ ທີ່ຈະມີນັກຮຽນທີ່ມີຄວາມສາມາດຄ້າຍຄືກັນໝົດ ແລະ ການສຶກສາຮຽນຮ່ວມ ຍັງຊຸກຍູ້ໃຫ້ຄູອາຈານເຫັນທ່າແຮງ ແລະ ເຂົ້າໃຈເຖິງຄວາມຕ້ອງການຂອງນັກຮຽນ ແຕ່ລະຄົນນຳອີກ. ການປະຕິຮູບລະບົບການສຶກສາ ເພື່ອໃຫ້ແທດເໝາະກັບ ການສອນນັກຮຽນ ທີ່ມີຄວາມແຕກຕ່າງກັນນັ້ນ ແມ່ນເປົ້າໝາຍໄລຍະຍາວ ເຊິ່ງຮຽກຮ້ອງໃຫ້ມີຄວາມເອົາໃຈໃສ່ ແລະ ມີທຶນຮອນ.

ໃນປີ 1993, ບາດກ້າວທຳອິດ ໃນການເອົານັກຮຽນທີ່ມີຄວາມແຕກຕ່າງກັນ ເຂົ້າໃນລະບົບການສຶກສາ ແມ່ນເລີ່ມຕົ້ນຈາກທາງສູນຟື້ນຟູແຫ່ງຊາດ ແລະ ໂຮງຮຽນສາມັນແຫ່ງໜຶ່ງໃນນະຄອນຫຼວງວຽງຈັນ ໄດ້ຮ່ວມມືກັນ ປ່ຽນໂຮງຮຽນ ໃຫ້ກາຍເປັນໂຮງຮຽນສາທິດ ສຳລັບເດັກນ້ອຍຫູໜວກ ແລະ ຕາບອດ. ໃນປີທຳອິດ ມີນັກຮຽນສະໝັກເຂົ້າຮຽນຢູ່ ສິບສອງຄົນ. ໃນຂະນະທີ່ໂຮງຮຽນດັ່ງກ່າວ ໄດ້ມີການສິດສອນ ສະເພາະສຳລັບນັກຮຽນຕາບອດ ແລະ ຫູໜວກ, ໃນປີດຽວກັນນີ້ ກະຊວງສຶກສາທິການ ໄດ້ເລີ່ມຕົ້ນໂຄງການກ່ຽວກັບການສຶກສາຮຽນຮ່ວມ ທີ່ມີໄລຍະ16 ປີ ໂດຍເຮັດວຽກຮ່ວມກັບອົງການຊ່ວຍເຫຼືອເດັກ (ຂອງປະເທດນໍເວ ແລະ ສະວີເດັນ) ເຊິ່ງໄດ້ຮັບທຶນຊ່ວຍເຫຼືອຈາກອົງການຮ່ວມມື ເພື່ອການພັດທະນາສາກົນ ຂອງສະວີເດັນ (SIDA). ໂຄງການການສຶກສາຮຽນຮ່ວມນີ້ ໄດ້ເພີ່ມໂອກາດການເຂົ້າເຖິງການສຶກສາ ໃຫ້ແກ່ ນັກຮຽນພິການ ໃນໂຮງຮຽນ ຫຼາຍກວ່າ 500 ແຫ່ງ ໃນທົ່ວປະເທດ ແລະ ເຮັດໃຫ້ ປະເທດລາວ ກາຍເປັນປະເທດ ທີ່ສາກົນໃຫ້ຄວາມສົນໃຈ ໃນຖານະທີ່ເປັນປະເທດຕົວຢ່າງ ໃນການມີບາດກ້າວທີ່ດີ ໃນການສົ່ງເສີມການສຶກສາຮຽນຮ່ວມ.

ມີ ການສຶກສາຄົ້ນຄວ້າຫຼາຍຂຶ້ນ ກ່ຽວກັບ ການສຶກສາຮຽນຮ່ວມວ່າ ສາມາດປັບປຸງຜົນການຮຽນຂອງນັກຮຽນໄດ້ແນວໃດ ໂດຍສະເພາະ ແມ່ນນັກຮຽນຍິງ. ການເນັ້ນໜັກໃສ່ການສຶກສາຂອງນັກຮຽນຍິງ ໃນໄລຍະຫຼາຍກວ່າສອງທົດສະຫວັດທີ່ຜ່ານມາ ໄດ້ເຮັດໃຫ້ມີການສຶກສາຄົ້ນຄວ້າຫຼາຍອັນທີ່ໜ້າສົນໃຈ ແລະ ເຮັດໃຫ້ມີຫຼັກຖານຢັ້ງຢືນ ກ່ຽວກັບການທີ່ມີປະສິດທິພາບ ໃນການ ຊ່ວຍໃຫ້ເດັກຍິງ ສາມາດເຂົ້າເຖິງ ແລະ ປະສົບຜົນສຳເລັດໃນ ການສຶກສາດັ່ງກ່າວໄດ້.

ການສຶກສາຄົ້ນຄວ້າ ແລະ ຫຼັກຖານ ກ່ຽວກັບການສຶກສາຮຽນຮ່ວມ ວ່າມີຜົນດີຕໍ່ນັກຮຽນກຸ່ມອື່ນແນວໃດ ເຊັ່ນ ນັກຮຽນທີ່ມາຈາກຊົນເຜົ່າ, ຈາກຊຸມຊົນຢູ່ຊົນນະບົດ, ເດັກພິການ, ເດັກທີ່ຖືກຜົນກະທົບຈາກວິກິດການ ແລະ ຄວາມບໍ່ສະຫງົບ , ເດັກທີ່ໄດ້ຮັບຜົນກະທົບຈາກໂລກເອດສ (HIV/AIDS), ເດັກນ້ອຍທີ່ມີຄວາມແຕກຕ່າງທາງເພດ, ເດັກນ້ອຍຂ້າງຖະໜົນ ແລະ ອື່ນໆ ແມ່ນຍັງມີຈຳກັດຢູ່.

### ແຜນງານບີຄວາ ສາມາດເຂົ້າໄປຊ່ວຍເຫຼືອໄດ້ບ່ອນໃດແດ່?

ອີງຕາມການສະເໜີຂອງສູນການສຶກສານຮຽນຮ່ວມຂອງກະຊວງສຶກສາທິການ ແລະ ກິລາ, ແຜນງານບີຄວາ ໄດ້ ຈ້າງຊ່ຽວຊານ ດ້ານການສຶກສາຮຽນຮ່ວມ ໄປປະຈຳ ຢູ່ສູນດັ່ງກ່າວໃນໄລຍະສັ້ນ ເພື່ອ ຊ່ວຍທົບທວນຄືນ ນະໂຍບາຍແຫ່ງຊາດ ວ່າດ້ວຍການສຶກສາຮຽນຮ່ວມ 2011-2015 ແລະ ຊ່ວຍຮ່າງ ເອກະສານແນະນຳ ກ່ຽວກັບການສຶກສາຮຽນຮ່ວມສະບັບໃໝ່ ສຳລັບສົກປີ 2016-2020. ຜົນໄດ້ຮັບຈາກການທົບທວນຄືນ ແລະ ຮ່າງບົດແນະນຳ ດັ່ງກ່າວ ໄດ້ຖືກແຈກຢາຍໃຫ້ແກ່ ບັນດາຄູ່ຮ່ວມພັດທະນາດ້ານການສຶກສາຮຽນຮ່ວມ ໃນເດືອນມີນາ 2016. ມາຮອດປະຈຸບັນ ໄດ້ມີການຈັດກອງປະຊຸມສຳມະນາຮ່ວມກັບບັນດາຄູ່ຮ່ວມພັດທະນາດ້ານການສຶກສາຮຽນຮ່ວມຂຶ້ນແລ້ວ 5 ຄັ້ງ ເພື່ອໃຫ້ບັນດາຄູ່ຮ່ວມພັດທະນາ ໄດ້ ປະກອບຄຳເຫັນເຂົ້າໃນການທົບທວນຄືນເຫຼົ່ານັ້ນ.

ນອກຈາກນີ້, ແຜນງານບີຄວາ ຍັງໃຫ້ທຶນການສຶກສາແກ່ນັກຮຽນຊົນເຜົ່າທີ່ມາຈາກເຂດຕ່າງໆ ຈຳນວນ 520 ທຶນ ເພື່ອສຶກສາຮ່ຳຮຽນ ແລະ ກາຍເປັນຄູສອນທີ່ມີຄຸນວຸດທິ ແລະ ກັບຄືນໄປ ສິດສອນຢູ່ທີ່ໂຮງຮຽນປະຖົມ ຂອງຊຸມຊົນພວກເຂົາເອງ. ວຽກງານ ນີ້ ແມ່ນການສານຕໍ່ ວຽກງານຂອງໂຄງການ ເພື່ອການສຶກສາຂັ້ນພື້ນຖານ ລາວ-ອົດສະຕຣາລີ ທີ່ໄດ້ຮັບການຕີລາຄາສູງ ເຊິ່ງຖືກຈັດຕັ້ງປະຕິບັດ ໃນລະຫວ່າງປີ 1999 ແລະ 2007.

> "ການຮຽນຮ່ວມ ແລະ ຄວາມເທົ່າທຽມກັນໃນການສຶກສາ ແມ່ນຫົວໃຈສຳຄັນຂອງການ ຫັນປ່ຽນການສຶກສາ ສະນັ້ນ ພວກເຮົາ ຈຶ່ງມີຄວາມມຸ່ງໝັ້ນ ໃນການແກ້ໄຂບັນຫາຮອບດ້ານ ກ່ຽວກັບ ການຈຳກັດ, ການຈຳແນກ ແລະ ຄວາມບໍ່ສະເໝີພາບກັນໃນການເຂົ້າເຖິງການສຶກສາ, ການມີສ່ວນຮ່ວມ ແລະ ຜົນການຮຽນ-ການສອນ."
>
> **ເດືອນພຶດສະພາ 2015 , ກອງປະຊຸມການສຶກສາ ສາກົນ**



# ການພັດທະນາ ຫຼັກສູດການຮຽນ-ການສອນ ຊັ້ນປະຖົມ ທີ່ທັນສະໄໝ

ລາວ ເປັນປະເທດທີ່ມີຄວາມຫຼາກຫຼາຍ ແລະ ລະບົບການສຶກສາຂອງປະເທດ ກໍ່ສະທ້ອນ ໃຫ້ເຫັນເຖິງສິ່ງດັ່ງກ່າວໄດ້ເປັນຢ່າງດີ. ເດັກນ້ອຍ ໄປໂຮງຮຽນຢູ່ວຽງຈັນ ເຊິ່ງ ເປັນຕົວເມືອງໃຫຍ່ ທີ່ເຕັມໄປດ້ວຍຄວາມທັນສະໄໝ ແລະ ສາມາດເຂົ້າເຖິງສິ່ງອຳນວຍຄວາມສະດວກຫຼາຍຢ່າງ ທີ່ເດັກນ້ອຍ ຢູ່ເຂດຫ່າງໄກສອກຫຼີກ ແລະ ເຂດຊົນນະບົດ ບໍ່ສາມາດເຂົ້າເຖິງໄດ້. ເດັກນ້ອຍ ມາໂຮງຮຽນ ເພື່ອເລີ່ມຕົ້ນເຂົ້າຮຽນໃນຊັ້ນ ປ 1 ກໍ່ມີພື້ນຖານການສຶກສາທີ່ແຕກຕ່າງກັນ. ເຖິງວ່າ ເດັກນ້ອຍຫຼາຍຄົນຈະເຄີຍໄດ້ເຂົ້າຮຽນ ໃນຊັ້ນອະນຸບານ ແລະ ປໍກຽມ ເພື່ອກຽມຄວາມພ້ອມສຳລັບເຂົ້າຮຽນຊັ້ນ ປ1, ແຕ່ກໍ່ມີເດັກນ້ອຍອີກຈຳນວນໜຶ່ງ ທີ່ບໍ່ເຄີຍເຂົ້າໂຮງຮຽນມາກ່ອນ ແລະ ບາງຄົນ ກໍ່ມາຈາກຄອບຄົວ ທີ່ບໍ່ເຄີຍເຂົ້າໂຮງຮຽນເລີຍ. ນອກຈາກນີ້, ປະເທດລາວ ກໍ່ຍັງເປັນປະເທດ ທີ່ມີຄວາມຫຼາກຫຼາຍດ້ານພາສາ ແລະ ມີເດັກນ້ອຍຫຼາຍຄົນ ທີ່ເວົ້າພາສາຊົນເຜົ່າ ແລະ ພາສາ ລາວກໍ່ບໍ່ແມ່ນພາສາແມ່ຂອງພວກເຂົາ.

ເພື່ອຍົກລະດັບຜົນການຮຽນຂອງເດັກນ້ອຍໝົດທຸກຄົນ, ບໍ່ວ່າພວກເຂົາຈະມີພື້ນຖານດ້ານການສຶກສາ ທີ່ແຕກຕ່າງກັນກໍ່ຕາມ, ແຜນງານບີຄວາ ໄດ້ເຮັດວຽກຮ່ວມກັບສະຖາບັນຄົ້ນຄວ້າວິທະຍາສາດ ດ້ານການສຶກສາ (ສວສ) ເພື່ອຊ່ວຍຜູ້ຂຽນຫຼັກສູດ ໃນການປັບປຸງ ແລະ ຂຽນຫຼັກສູດການຮຽນ-ການສອນ ຂອງຊັ້ນປະຖົມຄືນໃໝ່ ໃນ 6 ປີຂ້າງໜ້າ. ໜ້າວຽກດັ່ງກ່າວນີ້ ປະກອບດ້ວຍ ກອບຫຼັກສູດ, ປຶ້ມຕຳລາຮຽນ ແລະ ຄູ່ມືຄູ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ຫຼັກສູດການຮຽນ-ການສອນ ຢູ່ທີ່ໂຮງຮຽນຕ່າງໆ. ການສະໜອງ ອຸປະກອນການຮຽນການສອນເພີ່ມເຕີມໃຫ້ແກ່ຄູສອນ ແລະ ການສະໜອງປຶ້ມອ່ານເພີ່ມເຕີມ ໃຫ້ແກ່ນັກຮຽນ ແມ່ນສ່ວນໜຶ່ງຂອງແຜນການປັບປຸງຫຼັກສູດການຮຽນ-ການສອນ ສຳລັບຊັ້ນປະຖົມ.

ການຮຽນອ່ານ ຮຽນຂຽນພາສາລາວ ແມ່ນວຽກໜຶ່ງ ທີ່ໄດ້ຮັບການເນັ້ນໜັກໃສ່ ເພາະມັນມີຄວາມສຳຄັນໃນການຮຽນວິຊາອື່ນໆ ແລະ ມັນເປັນສິ່ງທ້າທາຍອັນໜຶ່ງ ສຳລັບເດັກນ້ອຍ ທີ່ບໍ່ສາມາດເວົ້າພາສາລາວໄດ້ ເມື່ອພວກເຂົາມາໂຮງຮຽນ. ທີມງານພາສາລາວ ຂອງສະຖາບັນ ຈະເຮັດວຽກ ເພື່ອປັບປຸງກອບຫຼັກສູດການຮຽນ-ການສອນ ແລະ ສະມັດຕະພາບດ້ານການຮຽນຮູ້ ສຳລັບວິຊາພາສາລາວ ໂດຍໄດ້ຮັບການຊ່ວຍເຫຼືອ ຈາກນັກພາສາສາດລາວ ແລະ ທີ່ປຶກສາດ້ານການສຶກສາ.

ການປັບປຸງທັກສະ ແລະ ຄວາມຮູ້ ກ່ຽວກັບວິຊາເລກ ສຳລັບນັກຮຽນຊັ້ນປະຖົມ ກໍ່ເປັນອີກຈຸດໜຶ່ງ ທີ່ໄດ້ຖືກເນັ້ນໜັກໃສ່. ທີມງານວິຊາເລກ ໂດຍໄດ້ຮັບການຊ່ວຍເຫຼືອຈາກອົງການຮ່ວມມືສາກົນຂອງຍີ່ປຸ່ນ ໄດ້ມີໂອກາດໄປສຶກສາ ເພື່ອພັດທະນາວິຊາສະເພາະຢູ່ ປະເທດຍີ່ປຸ່ນ ເພື່ອກຽມຕົວ ສຳລັບການຂຽນກອບຫຼັກສູດຊັ້ນປະຖົມ ແລະ ອຸປະກອນການຮຽນ-ການສອນ.

ສວສ ໄດ້ຈັດກອງປະຊຸມສຳມະນາຂຶ້ນຫຼາຍຄັ້ງ ເພື່ອຂຽນບົດແນະນຳ ສຳລັບກອບຫຼັກສູດການຮຽນ-ການສອນ. ກອງປະຊຸມສຳມະນາດັ່ງກ່າວ ຖືວ່າເປັນໂອກາດທີ່ສຳຄັນ ສຳລັບ ສວສ ແລະ ຜູ້ຂຽນຫຼັກສູດ ເພື່ອປຶກສາຫາລືກັນກ່ຽວກັບທິດທາງ ແລະ ຈຸດສຸມ ໃນການພັດທະນາຫຼັກສູດການຮຽນ-ການສອນ ສຳລັບຊັ້ນປະຖົມໃນອະນາຄົດ. ການປຶກສາຫາລືດັ່ງກ່າວ ປະກອບດ້ວຍ ການລວບລວມເອົາວິທີການສອນທີ່ຖືເອົານັກຮຽນເປັນໃຈກາງເຂົ້າໃນຫຼັກສູດການຮຽນ-ການສອນ , ວິຊາໃດແດ່ ທີ່ຄວນຈະຖືກເອົາເຂົ້າໃນຫຼັກສູດ ການຮຽນ-ການສອນ ສຳລັບຊັ້ນປະຖົມ ແລະ ບັນຫາຕ່າງໆອີກ ເຊັ່ນ: ການສອນຫ້ອງຄວບ, ການສຶກສາຮຽນຮ່ວມ ແລະ ການກຽມຄວາມພ້ອມ ສຳລັບການຮຽນຮູ້.

ການເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບວິທີການ ແລະ ການພັດທະນາການ ສຶກສາໃນປະຈຸບັນ ສຳລັບການຮຽນ ແລະ ການສອນ ແມ່ນມີຄວາມສຳຄັນ ສຳລັບຜູ້ຂຽນຫຼັກສູດ. ໄດ້ມີການຈັດກອງປະຊຸມສຳມະນາ ກ່ຽວກັບການພັດທະນາຂີດຄວາມສາມາດ ເປັນເວລາສອງອາທິດໃນເດືອນກຸມພາຂອງປີນີ້, ໃນຫົວຂໍ້ຕ່າງໆ ເຊັ່ນ: ວິທີການຮຽນຂອງນັກຮຽນ, ການປະເມີນຜົນການຮຽນຮູ້, ການສອນຫ້ອງຄວບ, ການສອນວິຊາພາສາລາວ ແລະ ເລກ, ວິຊາວິທະຍາສາດ ແລະ ສັງຄົມສຶກສາ ແລະ ວິທີການທີ່ຖືເອົານັກຮຽນເປັນໃຈກາງ. ນັກສຳມະນາກອນ ຈາກກະຊວງສຶກສາທິການ ແລະ ກິລາ ແລະ ຄູ່ຮ່ວມພັດທະນາ ໄດ້ຂຶ້ນນຳສະເໜີບົດ ກ່ຽວກັບການສຶກສາສຳລັບການພັດທະນາທີ່ຍືນຍົງ, ການກຽມຄວາມພອມ ເພື່ອການຮຽນຮ, ການສຶກສາຮຽນຮ່ວມ, ຫຼັກສູດການຮຽນ-ການສອນ ກ່ຽວກັບສະພາບແວດລ້ອມທ້ອງຖິ່ນ ແລະ ສຸຂະພາບດ້ານການຈະເລີນພັນ, ເພດສຶກສາ ແລະ ຫຼັກສູດທ້ອງຖິ່ນ.

ນອກຈາກນີ້, ຜູ້ເຂົ້າຮ່ວມໃນກອງປະຊຸມສຳມະນາຄັ້ງນີ້ ຍັງໄດ້ສຶກສາຮຽນຮູ້ແນວຄວາມຄິດ ກ່ຽວກັບ ‘ຮູບແບບການສິດສອນ’ ສຳລັບປະເທດລາວ ແລະ ໄດ້ເລີ່ມຕົ້ນພັດທະນາຮ່າງເບື້ອງຕົ້ນວ່າ ຮູບແບບດັ່ງກ່າວນີ້ ຄວນຈະເປັນແບບໃດ.



> **ການຂຽນຫຼັກສູດການຮຽນ-ການສອນ ສຳລັບໂຮງຮຽນປະຖົມ ແມ່ນໜ້າວຽກ ທີ່ໜັກໜ່ວງແຕ່ວ່າ ມັນກໍ່ເປັນໜ້າວຽກທີ່ໜ້າຕື່ນເຕັ້ນທີ່ລວບລວມ ເອົາພະນັກງານ ກະຊວງ ແລະ ຄູສອນຊັ້ນປະຖົມ ຫຼາຍໆຄົນ ເພື່ອມາເຮັດວຽກຮ່ວມກັນ ໃນໄລຍະເວລາ ຫຼາຍໆປີນີ້.**

# ການປັບປຸງສະພາບແວດລ້ອມໃນການຮໍ່າຮຽນ ໃຫ້ແກ່ເດັກນ້ອຍທຸກຄົນ

ໂດຍການສະໜັບສະໜູນຂອງແຜນງານບີຄວາ, ອົງການສະຫະປະຊາຊາດສຳລັບເດັກ (ຫຼື UNICEF) ໄດ້ສະໜອງ ນ້ຳໃຊ້ ແລະ ສຸຂາພິບານໃຫ້ແກ່ເດັກນ້ອຍຢູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃນ ສປປ ລາວ. ການປັບປຸງສະພາບແວດລ້ອມໃນການຮໍ່າຮຽນ ແມ່ນມີຄວາມສຳຄັນ ແລະ ຈຳເປັນ ຕໍ່ກັບການພັດທະນາທີ່ດີ ຂອງເດັກນ້ອຍ ໂດຍສະເພາະແມ່ນເດັກນ້ອຍພິການ, ເດັກນ້ອຍທີ່ຢູ່ໃນເຂດຫ່າງໄກສອກຫຼີກ, ແລະ ເດັກຊົນເຜົ່າ.

ຈິດ ເປັນເດັກຍິງ ອາຍຸ 9 ປີ ມາຈາກຊົນເຜົ່າກຶ່ມມຸ ບ້ານໝົກໂຄກາງ ເຊິ່ງເປັນເຂດຫ່າງໄກສອກຫຼີກ ຢູ່ແຂວງອຸດົມໄຊ. ຈິດ ເປັນໂລກຜິວໜັງຂັ້ນຮຸນແຮງມາແຕ່ເກີດ ເຊິ່ງສົ່ງຜົນກະທົບຕໍ່ກັບ ຊີວິດປະຈຳວັນ ແລະ ຄວາມສາມາດໃນການໃຊ້ຊີວິດໃນໄວເດັກຂອງລາວ ຄືກັນກັບໝູ່ຂອງລາວ. ລາວໄດ້ຮັບການປິ່ນປົວ ແຕ່ຕອນເກີດໃໝ່ເທົ່ານັ້ນ ເຊິ່ງກໍ່ເປັນການປິ່ນປົວ ທີ່ຊ່ວຍຮັກສາໄດ້ພຽງເລັກນ້ອຍ ແລະ ເນື່ອງຈາກຂາດແຄນທາງດ້ານການເງິນ ຄອບຄົວຂອງນາງຈິດ ຈຶ່ງບໍ່ສາມາດຈ່າຍຄ່າປິ່ນປົວໄດ້ອີກ.

ຍິ່ງເວລາຜ່ານໄປ, ຈິດ ກໍ່ຍິ່ງໃຊ້ນິ້ວມື ແລະ ນິ້ວຕີນ ໄດ້ບໍ່ສະດວກ ແລະ ຢູ່ໜ້າຂອງລາວກໍ່ມີຮອຍບາດແຜ ທີ່ເກີດຈາກການປິ່ນປົວ.

ພໍ່ຂອງຈິດ ເວົ້າວ່າ: “ຈິດ ມີຄວາມຫຍຸ້ງຍາກຫຼາຍໃນການຍ່າງໄປໂຮງຮຽນ”. ໃນແຕ່ລະມື້, ຈິດ ໃຊ້ເວລາຍ່າງໄປໂຮງຮຽນ ປະມານ 1 ຊົ່ວໂມງ ໂດຍຄ່ອຍໆຍ່າງໄປຕາມທາງທີ່ເປັນເນີນພູ ໂດຍສະເພາະແມ່ນຊ່ວງລະດູຮ້ອນທີ່ມີອຸນຫະພູມສູງເຖິງ 40 ອົງສາ ແມ່ນເປັນເວລາທີ່ມີຄວາມລຳບາກຫຼາຍ ແຕ່ວ່າ ຈິດ ເປັນເດັກນ້ອຍທີ່ມີຄວາມມຸ່ງໝັ້ນຕໍ່ກັບການຮຽນສູງ.

ຄວາມມຸ້ງໝັ້ນນັ້ນສະແດງອອກໃຫ້ເຫັນຢູ່ໃບໜ້າ ແລະ ດວງຕາຂອງລາວ ເວລາລາວຍ່າງອອກໄປໜ້າກະດານ ເພື່ອນຳພາໝູ່ນັກຮຽນຢູ່ໃນຫ້ອງເຮັດບົດເຝິກຫັດ ເຊິ່ງລາວມ່ວນກັບຊ່ວງເວລາເຫຼົ່ານີ້.

ເມື່ອຮອດເວລາພັກຜ່ອນ ເດີ່ນໂຮງຮຽນທີ່ງຽບສະຫງົບ ກໍ່ກັບມາມີຊີວິດຊີວາກັບການຫຼິ້ນ ແລະ ການໂອ້ລົມກັນຂອງນັກຮຽນ ຈຳນວນ 125 ຄົນ. ນັກຮຽນຫຼາຍຄົນແລ່ນໄປດື່ມນ້ຳ ແລະ ໄປຫຼິ້ນກິລາເປຕັງ (ໝາກບູນ) ເຊິ່ງເປັນກິລາພື້ນບ້ານຊະນິດໜຶ່ງຂອງປະເທດຝຣັ່ງ ທີ່ນິຍົມຫຼິ້ນກັນຢູ່ທົ່ວໄປໃນ ສປປ ລາວ.

ໃນຂະນະທີ່ນັກຮຽນຊາຍ ກຳລັງປ່ຽນຜຽນກັນກັບນັກຮຽນຍິງ ໂຍນໝາກບູນຢູ່ເດີ່ນໂຮງຮຽນນັ້ນ, ຈິດ ໄດ້ຄ່ອຍໆຍ່າງໄປຕາມລະບຽງຫ້ອງຮຽນຢ່າງຊ້າໆກັບໝູ່ຄູ່ຂອງລາວ, ມັນໄດ້ສະແດງໃຫ້ເຫັນເຖິງຄວາມຕັ້ງໃຈຂອງລາວທີ່ຈະຍ່າງ ແຕ່ໜ້າຫ້ອງຮຽນຈົນສຸດລະບຽງ ເພື່ອມາເບິ່ງໝູ່ເພື່ອນນັກຮຽນຢອກຫຼິ້ນກັນຢູ່ທີ່ເດີ່ນໂຮງຮຽນ.

ທີມງານເຮັດວຽກ ກ່ຽວກັບການສະໜອງນ້ຳໃຊ້ ແລະ ສຸຂາພິບານ ຂອງອົງການ UNICEF ປະຈຳ ສປປ ລາວ ໄດ້ມາເຮັດວຽກຢູ່ບ້ານ ໝົກໂຄກາງ ແຂວງອຸດົມໄຊ ເພື່ອມາກວດກາເບິ່ງ ຫ້ອງນ້ຳ ແລະ ລະບົບນ້ຳທີ່ຫາກໍ່ສ້າງແລ້ວ. ບັນດາສິ່ງອຳນວຍຄວາມສະດວກເຫຼົ່ານີ້ ມີທາງຂຶ້ນສຳລັບຄົນພິການ ເຊິ່ງຊ່ວຍໃຫ້ນັກຮຽນພິການ ຄືກັບນາງຈິດ ສາມາດໃຊ້ຫ້ອງນ້ຳໄດ້ສະດວກຂຶ້ນ. ວຽກງານນີ້ເປັນວຽກງານທີ່ສຳຄັນຢ່າງຍິ່ງສຳລັບ ສປປ ລາວ ເຊິ່ງມີໂຮງຮຽນປະມານ 57% ທີ່ຍັງບໍ່ມີນ້ຳໃຊ້ ແລະ ສຸຂາພິບານ ແລະ ບັນດາຊຸມຊົນຢູ່ເຂດຊົນນະບົດ ຍັງຖ່າຍແບບຊະຊາຍ. ສິ່ງອຳນວຍຄວາມສະດວກເຫຼົ່ານີ້ຈະຊ່ວຍໃຫ້ເດັກນ້ອຍ ຄືກັບນາງ ຈິດ ສາມາດເຂົ້າເຖິງ ສຸຂາພິບານ ໃນໂຮງຮຽນໄດ້ງ່າຍຂຶ້ນ.



## ບາດກ້າວຕໍ່ໄປຂອງ ແຜນງານບີຄວາ

ພາຍຫຼັງທີ່ແຜນງານບີຄວາ ໄດ້ສ້າງພື້ນຖານ ທາງດ້ານການຄຸ້ມຄອງບໍລິຫານແຜນງານ ແລະ ດ້ານນະໂຍບາຍ ທີ່ເຂັ້ມແຂງແລ້ວ, ຈຸດສຸມຂອງແຜນງານບີຄວາໃນສິບສອງເດືອນຂ້າງໜ້າ ຈະແມ່ນການຈັດຕັ້ງປະຕິບັດບັນດາກິດຈະກຳຫຼັກຕ່າງໆ. ກິດຈະກຳດັ່ງກ່າວນີ້ ຈະເປັນການສ້າງພື້ນຖານໃຫ້ແກ່ກິດຈະກຳອື່ນໆ ດ້ານການສຶກສາ ໃນອົງເຂດຜົນໄດ້ຮັບຕົ້ນຕໍ ທັງຫ້າອັນຂອງແຜນງານບີຄວາ ທີ່ຈະໃຫ້ການສະໜັບສະໜູນ ໃນປີ 2017 ແລະ ໃນຕໍ່ໜ້າ. ກິດຈະກຳດັ່ງກ່າວ ປະກອບດ້ວຍ:

- ສືບຕໍ່ເຮັດວຽກຮ່ວມກັບກຸ່ມຄູ່ຮ່ວມພັດທະນາທີ່ເປັນອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ກົມອະນຸບານ ແລະ ປະຖົມສຶກສາເພື່ອຈັດຕັ້ງປະຕິບັດກິດຈະກຳ ທີ່ສົ່ງເສີມການຮູ້ໜັງສື ແລະ ການຄິດໄລ່, ເສີມຂະຫຍາຍການມີສ່ວນຮ່ວມຂອງຊຸມຊົນ ໃນກິດຈະກຳດ້ານການສຶກສາ, ເພີ່ມຈຳນວນນັກຮຽນພິການ ໃຫ້ສາມາດເຂົ້າເຖິງການສຶກສາໄດ້ຫຼາຍຂຶ້ນ ແລະ ຄຸ້ມຄອງແຜນງານ ກ່ຽວກັບການສະໜອງນ້ຳ ແລະ ສຸຂາພິບານ ເພື່ອປັບປຸງມາດຕະຖານດ້ານສຸຂະພາບ ແລະ ສຸຂະອະນາໄມ ໃນບັນດາຊຸມຊົນທີ່ດ້ອຍໂອກາດ ແລະ ຢູ່ຫ່າງໄກສອກຫຼີກ. ຈຸດປະສົງຂອງກິດຈະກຳ ແມ່ນເພື່ອເພີ່ມໂອກາດ ໃຫ້ນັກຮຽນດ້ອຍໂອກາດໄດ້ເຂົ້າຮຽນ ໃນໂຮງຮຽນ 119 ແຫ່ງ ໃນ 6 ເມືອງ.
- ຊ່ວຍສະໜັບສະໜູນຜູ້ບໍລິຫານການສຶກສາ ໃນຂັ້ນສູນກາງ, ຂັ້ນເມືອງ ແລະ ຂັ້ນແຂວງ ໂດຍຜ່ານການເຂົ້າຝຶກອົບຮົມ ແລະ ການເຮັດວຽກຕົວຈິງເພື່ອຊ່ວຍໃຫ້ພວກເຂົາມີຄວາມເຂົ້າໃຈ ແລະ ຄຸ້ມຄອງນະໂຍບາຍ ແລະ ປະຕິບັດວຽກງານ ພາຍໃນກະຊວງສຶກສາທິການ ແລະ ກິລາ ແລະ ໃນທຸກຂັ້ນ ໄດ້ດີກວ່າເກົ່າ.
- ການຄັດເລືອກນັກຮຽນຄູຊົນເຜົ່າລຸ້ນທີ 2 ໄດ້ຖືກຮັບຮອງ. ນີ້ໝາຍຄວາມວ່າ ນັກຮຽນ ຄູຊົນເຜົ່າຫຼາຍກວ່າ 320 ຄົນ ໄດ້ຮັບທຶນຝຶກອົບຮົມສ້າງຄູ ຢູ່ບັນດາວິທະຍາໄລສ້າງຄູຂອງກະຊວງ. ພວກເຮົາ ຄາດໄວ້ວ່າ 70 ເປີເຊັນຂອງນັກຮຽນຄູຊົນເຜົ່າ ທີ່ທາງແຜນງານບີຄວາ ໃຫ້ການສະໜັບສະໜູນ ເປັນຜູ້ຍິງ.
- ສືບຕໍ່ພັດທະນາຫຼັກສູດການສຶກສາຂັ້ນປະຖົມ ເຊິ່ງສະຖາບັນຄົ້ນຄວ້າ ວິທະຍາສາດ ການສຶກສາ ໄດ້ເຮັດວຽກຮ່ວມກັບກົມກອງອື່ນໆຂອງກະຊວງ ແລະ ບັນດາຜູ້ໃຫ້ທຶນ. ການພັດທະນາ ຫຼັກສູດວິຊາຮຽນໃນຊັ້ນປະຖົມ ແລະ ອຸປະກອນການຮຽນການສອນ ໄດ້ເລີ່ມຕົ້ນ ຈັດຕັ້ງປະຕິບັດ. ນອກຈາກນີ້, ຍັງຊ່ວຍສ້າງຂີດຄວາມສາມາດໃຫ້ແກ່ບຸກຄະລາກອນ ໃນສະຖາບັນຢ່າງຕໍ່ເນື່ອງ ເພື່ອຮັບປະກັນວ່າສະຖາບັນ ມີບຸກຄະລາກອນທີ່ມີຄວາມສາມາດ ໃນຕໍ່ໜ້າ.
- ໄດ້ມີການສ້ອມແປງພື້ນຖານໂຄງລ່າງ ໃຫ້ແກ່ໂຮງຮຽນ ຈຳນວນ 380 ກວ່າແຫ່ງ ແລະ ສືບຕໍ່ວາງແຜນສ້ອມແປງໂຮງຮຽນ ຂອງນັກຮຽນຄູຊົນເຜົ່າລຸ້ນທີ 1 ແລະ 2 ໃນໄລຍະຫົກເດືອນຕໍ່ໜ້າ. ບັນດາຊຸມຊົນ ຈະເປັນຜູ້ຄຸ້ມຄອງການສ້ອມແປງ ແລະ ປັບປຸງພື້ນຖານໂຄງລ່າງດັ່ງກ່າວ ໂດຍໃຊ້ລະບົບການກໍ່ສ້າງທີ່ໃຫ້ຊຸມຊົນເປັນເຈົ້າການ. ລະບົບດັ່ງກ່າວນີ້ ຈະຊ່ວຍຊຸກຍູ້ໃຫ້ຄະນະພັດທະນາການສຶກສາຂັ້ນບ້ານ ເປັນເຈົ້າການ ໃນການຄຸ້ມຄອງ ການສ້ອມແປງໂຮງຮຽນ ແລະ ກິດຈະກຳດ້ານການສຶກສາຂອງນັກຮຽນ. ນອກຈາກນີ້, ຍັງຈະມີການຍົກລະດັບພື້ນຖານໂຄງລ່າງຢູ່ທີ່ວິທະຍາໄລຄູທັງສາມແຫ່ງ ເພື່ອໃຫ້ນັກຮຽນຄູຊົນເຜົ່າໄດ້ນຳໃຊ້ ສິ່ງອຳນວຍຄວາມສະດວກຕ່າງໆທີ່ປອດໄພ.

# ຊ່ວຍໃຫ້ເດັກນ້ອຍ ມີສີກກະຍະພາບຢ່າງເຕັມສ່ວນ ຜ່ານການສະໜອງອາຫານທີ່ດີຕໍ່ສຸຂະພາບ

ໂຄງການອາຫານໂຮງຮຽນຂອງ ອົງການອາຫານໂລກ (World Food Programme) ບໍ່ພຽງແຕ່ສະໜອງອາຫານທີ່ມີສານອາຫານຄົບໝູ່ໃຫ້ນັກຮຽນເທົ່ານັ້ນ, ແຕ່ຍັງຊ່ວຍສະໜັບສະໜູນ ເພື່ອຮັບປະກັນໃຫ້ນັກຮຽນ ມາຮຽນຢູ່ໂຮງຮຽນ, ມີຄວາມກະຕືລືລົ້ນ ແລະ ຕັ້ງໃຈຮຽນ ແລະ ມີສັກກະຍະພາບຢ່າງເຕັມສ່ວນ ໂດຍການປັບປຸງການສຶກສາ ແລະ ສຸຂະພາບ.

ຂໍຂອບໃຈ ແຜນງານບີຄວາ ທີ່ໃຫ້ການສະໜັບສະໜູນ ເດັກນັກຮຽນຈຳນວນ 150,000 ຄົນ ໃຫ້ມີອາຫານຫວ່າງ ຫຼື ອາຫານທ່ຽງທີ່ມີໂພຊະນາການຄົບໝູ່ກິນໃນທຸກໆມື້. ອົງການອາຫານໂລກ ໄດ້ສະໜອງ ອາຫານຫວ່າງໃນຕອນເຊົ້າ ເຊິ່ງເຮັດຈາກ ແປ້ງສາລີປະສົມຖົ່ວເຫຼືອງ ປະສົມກັບນ້ຳຕານ ແລະ ນ້ຳມັນພືດທີ່ເຕັມໄປດ້ວຍວິຕາມິນ ແລະ ສານອາຫານ, ຫຼື ອາຫານທ່ຽງ ທີ່ມີເຂົ້າ, ນ້ຳມັນພືດ ແລະ ຜັກສົດຈາກສວນຄົວໂຮງຮຽນ ໃຫ້ແກ່ເດັກນ້ອຍນັກຮຽນຊັ້ນອະນຸບານ ແລະ ຊັ້ນປະຖົມ.

ນັບຕັ້ງແຕ່ເດືອນກັນຍາ ປີ 2015, ອົງການອາຫານໂລກ ໄດ້ເລີ່ມປ່ຽນຈາກການສະໜອງອາຫານຫວ່າງ ໄປເປັນອາຫານທ່ຽງ ໂດຍປະຕິບັດຕາມນະໂຍບາຍ ກ່ຽວກັບການສະໜອງອາຫານທ່ຽງໃນໂຮງຮຽນຂອງລັດຖະບານ ສປປ ລາວ. ການສະໜອງອາຫານທ່ຽງ ໄດ້ຖືກຈັດຕັ້ງປະຕິບັດແລ້ວ ຢູ່ໃນໂຮງຮຽນ ຈຳນວນ 259 ແຫ່ງ ໂດຍມີເປົ້າໝາຍວ່າຈະສະໜອງອາຫານທ່ຽງ ໃຫ້ທົ່ວ 1,450 ໂຮງຮຽນທີ່ທາງອົງການອາຫານໂລກ ໄດ້ໃຫ້ການສະໜັບສະໜູນຢູ່. ໂຄງການອາຫານທ່ຽງດັ່ງກ່າວນີ້ ແມ່ນລວມມີ ການເຮັດສວນຄົວໂຮງຮຽນ ເຊິ່ງຈະແມ່ນຄູສອນ ແລະ ນັກຮຽນ ເປັນຜູ້ເບິ່ງແຍງບົວລະບັດ ພ້ອມທັງໃຊ້ເປັນບ່ອນຮຽນຮູ້ ກ່ຽວກັບໂພຊະນາການ ແລະ ການເຮັດສວນຄົວໂຮງຮຽນນຳອີກ. ສວນຄົວດັ່ງກ່າວ ຍັງສະໜອງຜັກທີ່ອຸດົມໄປດ້ວຍໂພຊະນາການ ເພື່ອໃຊ້ປຸງແຕ່ງ ອາຫານທ່ຽງສຳລັບນັກຮຽນ.

ການຊ່ວຍເຫຼືອຂອງແຜນງານບີຄວາ ແມ່ນຊ່ວຍໃຫ້ເດັກນ້ອຍ ໄດ້ມີໂພຊະນາການ ແລະ ພະລັງງານ ທີ່ຈຳເປັນ ສຳລັບພວກເຂົາ ເພື່ອການຈະເລີນເຕີບໂຕພ້ອມທັງຊຸກຍູ້ສົ່ງເສີມໃຫ້ຊຸມຊົນໄດ້ເຂົ້າມາມີສ່ວນຮ່ວມ ແລະ ຍັງເປັນການເສີມສ້າງຂີດຄວາມສາມາດ ໃຫ້ແກ່ລັດຖະບານ ໃນການຊີ້ນຳແຜນງານໃນອະນາຄົດ.

**ໂດຍຜ່ານ ການຮ່ວມມືກັບແຜນງານບີຄວາ, ອົງການອາຫານໂລກ ສາມາດໃຫ້ການຊ່ວຍເຫຼືອທາງດ້ານວິຊາການ ແລະ ຝຶກອົບຮົມໃຫ້ແກ່ຊຸມຊົນ ເພື່ອຮັບປະກັນຄວາມຍືນຍົງຂອງແຜນງານ ເພື່ອກະກຽມຮັບຄວາມຮັບຜິດຊອບເທື່ອລະກ້າວ. ນອກຈາກນີ້, ທຶນຊ່ວຍເຫຼືອ ຍັງຖືກນຳໃຊ້ ເພື່ອເຮັດອ່າງນ້ຳເພື່ອໃຊ້ໃນສວນຜັກໂຮງຮຽນນຳອີກ.**





ກະຊວງສຶກສາທິການ ແລະ ກິລາ
ຖະໜົນລ້ານຊ້າງ ເລກທີ 1

ນະຄອນຫຼວງວຽງຈັນ
ສປປ ລາວ

+856 30 5412422
info@bequal-laos.org

www. bequal-laos.org